# ພຣະທັມພຣະນິມິດ



| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | | |



## ພຣະນິມິດ

## REVELATION

ຊຶ່ງຊົງສະແດງ ຕໍ່ ໂຢຮັນ

to John

### 1 ຄຳນຳ

Introduction and Salutation

1 ການຊົງສະແດງຂອງພຣະເຢຊູຄຣິດ ຊຶ່ງພຣະເຈົ້າໄດ້ຊົງປະທານແກ່ພຣະອົງ ເພື່ອຊົງຊີ້ແຈງໃຫ້ບັນດາຂ້ອຍ
ໃຊ້ຂອງພຣະອົງຮູ້ເຖິງເຫດການທັງຫລາຍ ທີ່ຕ້ອງບັງເກີດຂຶ້ນໃນບໍ່ຊ້ານີ້ ພຣະຄຣິດໄດ້ຊົງໃຊ້ເທວະດາຂອງ
ພຣະອົງໄປສະແດງໝາຍສຳຄັນແກ່ໂຢຮັນ ຂ້ອຍໃຊ້ຂອງພຣະອົງ
2 ໂຢຮັນເປັນພຍານຝ່າຍພຣະທັມຂອງພຣະເຈົ້າ ແລະຝ່າຍຄຳພຍານຂອງພຣະເຢຊູຄຣິດ ທ່ານເປັນພຍານໃນ
ເຫດການທັງສິ້ນຊຶ່ງທ່ານໄດ້ເຫັນນັ້ນ
3 ບັນດາຜູ້ອ່ານແລະຜູ້ຟັງຄຳທຳນວາຍເຫລົ່ານີ້ແລະບັນດາຜູ້ທີ່ຖືຮັກສາຂໍ້ຄວາມທີ່ຂຽນໄວ້ນີ້ກໍເປັນສຸກ ເພາະວ່າ
ເວລານັ້ນໃກ້ເຂົ້າມາແລ້ວ
4 ຈາກ ໂຢຮັນຮຽນ ຄຣິສຕະຈັກທັງເຈັດຢູ່ໃນແຂວງອາເຊັຽຂໍໃຫ້ທ່ານທັງຫລາຍຈົ່ງໄດ້ຮັບພຣະຄຸນ ແລະສັນຕິສຸກ
ຈາກພຣະອົງ ຜູ້ຊົງດຳຣົງຢູ່ໃນປັດຈຸບັນ ຜູ້ຊົງດຳຣົງຢູ່ໃນອະດີດ ຜູ້ຈະສະເດັດມາໃນອະນາຄົດ ແລະຈາກວິນ
ຍານທັງເຈັດທີ່ເຝົ້າຢູ່ຫນ້າຣາຊບັນລັງຂອງພຣະອົງ
5 ແລະຈາກພຣະເຢຊູຄຣິດຜູ້ຊົງເປັນພຍານທີ່ສັດຊື່ ແລະຊົງເປັນຜູ້ແຣກທີ່ໄດ້ຄືນມາຈາກຄວາມຕາຍ ກັບທັງຊົງ
ຄອບຄອງກະສັດທັງຫລາຍໃນໂລກ ພຣະອົງຊົງຮັກເຮົາທັງຫລາຍ ແລະໄດ້ຊົງປົດປ່ອຍພວກເຮົາຈາກການຜິດ
ບາບດ້ວຍພຣະໂລຫິດຂອງພຣະອົງ
6 ພຣະອົງຊົງຕັ້ງເຮົາທັງຫລາຍໄວ້ໃຫ້ເປັນອານາຈັກ ແລະເປັນປະໂຣຫິດຂອງພຣະອົງ ພຣະກຽດແລະພຣະອານຸ
ພາບຈົ່ງມີແດ່ພຣະອົງສືບໆໄປເປັນນິດ ອາແມນ
7 ເບິ່ງແມ, ພຣະອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາມທຸກໜ່ວຍຈະເຫັນພຣະອົງ ແລະຄົນເຫລົ່ານັ້ນທີ່
ແທງພຣະອົງຈະເຫັນເໝືອນກັນ ມະນຸດຊາດທົ່ວໂລກຈະຮ້ອງໄຫ້ຮ່ຳໄຮເພາະພຣະອົງ ຈະເປັນໄປຢ່າງນັ້ນ ອາ
ແມນ
8 ອົງພຣະຜູ້ເປັນເຈົ້າ ຜູ້ຊົງດຳຣົງຢູ່ໃນປັດຈຸບັນ ຜູ້ຊົງດຳຣົງຢູ່ໃນອະດີດ ຜູ້ຈະສະເດັດມາໃນອະນາຄົດ ແລະຜູ້ຊົງ
ຣິດທານຸພາບສູງສຸດ ຊົງກ່າວວ່າ, “ຝ່າຍເຮົາຄື ອາລະຟາ ໂອເມຄາ”

### ນິມິດເຫັນບຸດມະນຸດ

A Vision of Christ

9 ຂ້າພະເຈົ້າ ຄືໂຢຮັນ ພີ່ນ້ອງຂອງທ່ານທັງຫລາຍ ຜູ້ເປັນເພື່ອນຮ່ວມການຍາກລຳບາກ ຮ່ວມຣາຊອານາຈັກ
ແລະຮ່ວມຄວາມພຽນອົດທົນຊຶ່ງເປັນປະສົບການໃນພຣະເຢຊູ ຂ້າພະເຈົ້າໄດ້ມາຢູ່ທີ່ເກາະປັດໂມ ເນື່ອງດ້ວຍ
ພຣະທັມຂອງພຣະເຈົ້າແລະເນື່ອງດ້ວຍການເປັນພຍານຝ່າຍພຣະເຢຊູ
10 ໃນວັນຂອງອົງພຣະຜູ້ເປັນເຈົ້າ ຂ້າພະເຈົ້າປະກອບໄປດ້ວຍພຣະວິນຍານ ແລ້ວໄດ້ຍິນພຣະສຸຣະສຽງດັ່ງມາ
ເບື້ອງຫລັງຂ້າພະເຈົ້າເໝືອນດັ່ງສຽງແກ
11 ຊົງກ່າວວ່າ, "ອັນທີ່ທ່ານໄດ້ເຫັນນັ້ນຈົ່ງຂຽນໄວ້ໃນໜັງສືມ້ວນ ແລ້ວຝາກໄປໃຫ້ຄຣິສຕະຈັກທັງເຈັດ ຄືຄຣິສຕະ
ຈັກທີ່ເມືອງເອເຟໂຊ ເມືອງຊະມີນາ ເມືອງເປຄາໂມທິວເຕຣາ ເມືອງຊາເດ ເມືອງຟີລາເດັນເຟັຽ ແລະທີ່ເມືອງ
ລາວດີເກອາ"
12 ຂ້າພະເຈົ້າຈຶ່ງຫລຽວຫລັງເບິ່ງທາງພຣະສຸຣະສຽງທີ່ຊົງກ່າວແກ່ຂ້າພະເຈົ້ານັ້ນ ຄັນແລ້ວຂ້າພະເຈົ້າກໍເຫັນເຄື່ອງ
ຮອງຕີນໂຄມທອງຄຳເຈັດອັນ
13 ໃນຖ້າມກາງເຄື່ອງຮອງຕີນໂຄມເຫລົ່ານັ້ນມີຜູ້ນຶ່ງເໝືອນບຸດມະນຸດ ຊົງສວມເຄື່ອງສລອງກວມພຣະບາດ ແລະ
ຊົງຮັດສາຍປະຄົດທອງຄຳທີ່ພຣະອຸຣະຂອງພຣະອົງ
14 ພຣະສຽນແລະພຣະເກສາຂອງພຣະອົງຂາວເໝືອນຂົນແກະສີຂາວ ແລະເໝືອນດັ່ງຫິມະ ພຣະເນດຂອງພຣະ
ອົງເໝືອນດັ່ງແປວໄຟ
15 ພຣະບາດຂອງພຣະອົງເໝືອນດັ່ງທອງເຫລືອງກ້ຽງ ເໝືອນກັບວ່າໄດ້ຫລອມໃຫ້ບໍຣິສຸດແລ້ວ ພຣະສຸຣະສຽງ
ຂອງພຣະອົງເໝືອນສຽງນໍ້າມາກ
16 ພຣະຫັດກໍ້າຂວາຂອງພຣະອົງຊົງຖືດາວເຈັດດວງ ມີພຣະແສງສອງຄົມອອກມາຈາກພຣະໂອດ ແລະພຣະພັກ
ຂອງພຣະອົງເໝືອນດັ່ງດວງອາທິດທີ່ສ່ອງແສງກ້າ
17 ເມື່ອຂ້າພະເຈົ້າໄດ້ເຫັນພຣະອົງ ຂ້າພະເຈົ້າໄດ້ກົ້ມລົງແທບພຣະບາດຂອງພຣະອົງ ເໝືອນດັ່ງຄົນທີ່ຕາຍແລ້ວ
ແຕ່ພຣະອົງຊົງຢຽດພຣະຫັດກໍ້າຂວາບາຍຂ້າພະເຈົ້າ ແລ້ວຊົງກ່າວວ່າ, "ຢ່າຊູ່ຢ້ານ, ຝ່າຍເຮົາເປັນຜູ້ຕົ້ນ ແລະ
ເປັນເປັນຜູ້ປາຍ ແລະເປັນຜູ້ມີຊີວິດຢູ່
18 ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ, ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະ
ແຫ່ງແດນມໍຣະນາ
19 ສັນນີ້ຈົ່ງຂຽນເຫດການທັງຫລາຍທີ່ເຈົ້າໄດ້ເຫັນ ຄືເຫດການທັງຫລາຍທີ່ໄດ້ເຫັນ ຄືເຫດການທີ່ເປັນຢູ່ດຽວນີ້ກັບ
ທັງເຫດການທີ່ຈະເກີດຂຶ້ນໃນພາຍໜ້າເໝືອນກັນ
20 ສ່ວນຄວາມເລິກລັບຂອງດາວທັງເຈັດນັ້ນ ກໍຄືດາວເຈັດດວງນັ້ນໄດ້ແກ່ທູດຂອງພຣະເຈົ້າໃນຄຣິສຕະຈັກທັງ
ເຈັດ ແລະເຄື່ອງຮອງຕີນໂຄມທັງເຈັດນັ້ນໄດ້ແກ່ຄຣິສຕະຈັກທັງເຈັດ

## 2 ຂຽນໄປເຖິງຄຣິສຕະຈັກເມືອງເອເຟໂຊ

The Message to Ephesus

1 "ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກເມືອງເອເຟໂຊວ່າ, "ພຣະອົງຜູ້ຊົງຖືດາວທັງເຈັດໄວ້ໃນພຣະ
ຫັດເບື້ອງຂວາ ແລະສະເດັດໄປມາໃນຖ້າມກາງເຄື່ອງຮອງຕີນໂຄມທອງຄຳທັງເຈັດນັ້ນ ຊົງກ່າວດັ່ງນີ້ວ່າ,
2 "ເຮົາຮູ້ຈັກການກະທຳຂອງເຈົ້າ ຮູ້ຈັກຄວາມເມື່ອຍຍາກ ແລະຄວາມພຽນອົດທົນຂອງເຈົ້າ ແລະຮູ້ຈັກເຈົ້າບໍ່ສາ
ມາດທົນຕໍ່ຄົນຊົ່ວ ເຈົ້າໄດ້ລອງໃຈຄົນເຫລົ່ານັ້ນທີ່ອວດວ່າເປັນອັຄສາວົກ ແຕ່ເຂົາບໍ່ເປັນ ແລະເຈົ້າເຫັນວ່າເຂົາ
ເປັນຄົນປອມ
3 ເຮົາຮູ້ວ່າເຈົ້າຍັງມີຄວາມອົດທົນ ແລະໄດ້ອົດເອົາເພາະເຫັນແກ່ນາມຂອງເຮົາ ແລະບໍ່ໄດ້ເມື່ອຍລ້າໄປ

4 ແຕ່ເຮົາມີຂໍ້ຕໍ່ວ່າເຈົ້າ ຄືເຈົ້າໄດ້ປະຖິ້ມຄວາມຮັກເດີມຂອງເຈົ້າເສັຽ
5 ເຫດສັນນັ້ນຈົ່ງລະນຶກວ່າເຈົ້າໄດ້ຕົກຈາກສະພາບໃດ ແລ້ວຈົ່ງກັບໃຈເສັຽໃໝ່ ແລະທຳຕາມຢ່າງເດີມ ຖ້າບໍ່ດັ່ງ
ນັ້ນເຮົາຈະມາຫາເຈົ້າ ແລະຈະຍົກເຄື່ອງຮອງຕີນໂຄມຂອງເຈົ້າອອກຈາກບ່ອນມັນ ເວັ້ນໄວ້ແຕ່ເຈົ້າຈະກັບໃຈ
ເສັຽໃໝ່
6 ດີແຕ່ເຈົ້າຍັງມີສິ່ງນີ້ ຄືເຈົ້າກຽດຊັງກິຈການຂອງພວກນີໂກລາຍເຕ ຊຶ່ງເຮົາເອງກໍກຽດຊັງເໝືອນກັນ
7 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ ຜູ້ໃດມີຊັຍຊະນະ ເຮົາຈະໃຫ້ຜູ້ນັ້ນ
ກິນຜົນຈາກຕົ້ນໄມ້ສຳລັບຊີວິດຊຶ່ງຢູ່ໃນເທພອຸທຍານຂອງພຣະເຈົ້າ”

## ຂຽນໄປເຖິງຄຣິສຕະຈັກເມືອງຊະມີນາ

The Message to Smyrna

8 “ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຊະມີນາວ່າ, “ພຣອົງຜູ້ຊົງເປັນຜູ້ຕົ້ນແລະຜູ້ປາຍ ຜູ້ຊົງ
ສິ້ນພຣະຊົນແລ້ວແລະກັບຄືນມາອີກ ໄດ້ຊົງກ່າວດັ່ງນີ້ວ່າ,
9 ເຮົາຮູ້ວ່າພວກເຈົ້າມີຄວາມທຸກລຳບາກແລະຍາກຈົນ (ແຕ່ວ່າເຈົ້າກໍຮັ່ງມີ) ແລະຮູ້ຄວາມໝິ່ນປມາດຂອງຄົນ
ເຫລົ່ານັ້ນທີ່ເວົ້າວ່າເຂົາເປັນພວກຢິວ ແລະເຂົາບໍ່ເປັນ ແຕ່ພວກເຂົາເປັນພັກພວກຂອງຊາຕານ
10 ຢ່າຊູ່ຢ້ານຄວາມທຸກທໍຣະມານທີ່ເຈົ້າຈວນຈະໄດ້ຮັບນັ້ນ ເບິ່ງແມ, ພຍາມານຈວນຈະຈັບພວກເຈົ້າບາງຄົນຖິ້ມ
ໃສ່ຄຸກເພື່ອທົດລອງໃຈພວກເຈົ້າ ແລະພວກເຈົ້າຈະໄດ້ຮັບຄວາມທຸກລຳບາກໃນລະຫວ່າງສິບວັນ ແຕ່ເຈົ້າຈົ່ງມີ
ໃຈສັດຊື່ສຸຈຣິດຈົນເຖິງວັນຕາຍ ແລ້ວເຮົາຈະເອົາພວງມາລັຍແຫ່ງຊີວິດໃຫ້ແກ່ເຈົ້າ
11 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ ຜູ້ທີ່ມີຊັຍຊະນະຈະບໍ່ຖືກອັນຕະ
ຣາຍຈາກຄວາມຕາຍຄັ້ງທີສອງ”

## ຂຽນໄປເຖິງຄຣິສຕະຈັກເມືອງເປຄາໂມ

The Message to Pergamum

12 “ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກເມືອງເປຄາໂມວ່າ, “ພຣະອົງຜູ້ຊົງພຣະແສງສອງຄົມນັ້ນ ຊົງ
ກ່າວດັ່ງນີ້ວ່າ,
13 “ເຮົາຮູ້ຈັກທີ່ຢູ່ຂອງເຈົ້າ ຮູ້ວ່າທີ່ນັ້ນເປັນບັນລັງຂອງຊາຕານ ເຈົ້າຍັງຍຶດຖືນາມຂອງເຮົາໄວ້ໝັ້ນ ແລະບໍ່ໄດ້ປະຕິ
ເສດຄວາມເຊື່ອໃນເຮົາ ແມ່ນວ່າໃນເວລາທີ່ ອັນຕີປາ ຜູ້ເປັນພຍານທີ່ສັດຊື່ຂອງເຮົາ ໄດ້ຖືກຂ້າເສັຽໃນຖ້າມ
ກາງພວກເຈົ້າໃນບ່ອນທີ່ຊາຕານຢູ່ກໍຕາມ
14 ແຕ່ເຮົາມີຂໍ້ທີ່ຈະຕໍ່ວ່າເຈົ້າບາງຂໍ້ ທີ່ນັ້ນມີບາງຄົນໃນພວກເຈົ້າທີ່ຖືຕາມຄຳສອນຂອງບາລາອາມ ຜູ້ໄດ້ສອນໃຫ້
ກະສັດບາລາກກໍ່ເຫດການຕໍ່ໜ້າພວກອິສຣາເອນ ເພື່ອໃຫ້ເຂົາຫລົງຜິດ ຄືໃຫ້ເຂົາກິນຂອງທີ່ໄດ້ບູຊາແກ່ພຣະ
ທຽມແລ້ວ ແລະໃຫ້ເຂົາລ່ວງຜິດຊາຍຍິງ
15 ຢ່າງດຽວກັນໃນພວກເຈົ້າມີບາງຄົນທີ່ໄດ້ຖືຕາມຄຳສອນແຫ່ງພວກນີໂກລາຍເຕ
16 ເຫດສັນນັ້ນ ຈົ່ງກັບໃຈໃຫມ່ ຖ້າບໍ່ດັ່ງນັ້ນເຮົາຈະຮີບມາຫາເຈົ້າ ແລະຈະສູ້ຮົບກັບເຂົາເຫລົ່ານັ້ນດ້ວຍດາບຈາກ
ປາກຂອງເຮົາ
17 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ ເຮົາຈະໃຫ້ມານາທີ່ເຊື່ອງໄວ້ແກ່ຜູ້ທີ່
ມີຊັຍຊະນະ ແລະຈະໃຫ້ຫີນຂາວແກ່ຜູ້ນັ້ນ ໃນຫີນນັ້ນມີຊື່ໃໝ່ຈາຣຶກໄວ້ ຊຶ່ງບໍ່ມີຜູ້ໃດຮູ້ນອກຈາກຜູ້ທີ່ຮັບເທົ່າ
ນັ້ນ”

## ຂຽນໄປເຖິງຄຣິສຕະຈັກທີ່ເມືອງທົວເຕຣາ

The Message to Thyatira

18 "ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກເມືອງທົວເຕຣາວ່າ, "ພຣະບຸດຂອງພຣະເຈົ້າ ຜູ້ຊຶ່ງມີພຣະເນດ
ເໝືອນດັ່ງແປວໄຟ ແລະມີພຣະບາດເໝືອນດັ່ງທອງເຫລືອງກ້ຽງ ຊົງກ່າວດັ່ງນີ້ວ່າ,
19 "ເຮົາຮູ້ຈັກການກະທຳຂອງເຈົ້າ ຮູ້ຄວາມຮັກ ຄວາມເຊື່ອ ການປະຕິບັດ ແລະຄວາມພຽນອົດທົນຂອງເຈົ້າ ຮູ້
ວ່າການເບື້ອງປາຍຂອງເຈົ້າມີຫລາຍກວ່າການເບື້ອງຕົ້ນ
20 ແຕ່ເຮົາມີຂໍ້ທີ່ຈະຕໍ່ວ່າເຈົ້າ ຄືເຈົ້າຍອມທົນຟັງຜູ້ຍິງຊື່ເຢເຊເບນ ທີ່ອ້າງຕົວເປັນຜູ້ປະກາດພຣະທັມ ຍິງນັ້ນສອນ
ແລະລໍ້ລວງພວກຂ້ອຍໃຊ້ຂອງເຮົາໃຫ້ລ່ວງຜິດຊາຍຍິງ ແລະໃຫ້ກິນຂອງທີ່ບູຊາແກ່ພຣະທຽມແລ້ວ
21 ເຮົາໄດ້ໃຫ້ຍິງນັ້ນມີໂອກາດທີ່ຈະກັບໃຈໃຫມ່ ແຕ່ນາງບໍ່ຢາກກັບໃຈຈາກການຜິດຊາຍຍິງຂອງຕົນ
22 ດັ່ງນີ້ເຮົາຈະຖິ້ມຍິງນັ້ນໄວ້ເທິງບ່ອນນອນ ແລະຄົນທັງຫລາຍທີ່ລ່ວງຜິດຊາຍຍິງກັບຍິງນັ້ນ ເຮົາຈະຖິ້ມໄວ້ໃນ
ຄວາມທຸກລຳບາກອັນໜັກ ເວັ້ນໄວ້ແຕ່ຄົນເຫລົ່ານັ້ນຈະກັບໃຈເສັຽໃໝ່ຈາກບັນດາການກະທຳຂອງຍິງນັ້ນ
23 ຝ່າຍລູກຂອງຍິງນັ້ນ ເຮົາຈະປະຫານເຂົາໃຫ້ຕາຍເສັຽ ແລະຄຣິສຕະຈັກທັງປວງຈະໄດ້ຮູ້ວ່າເຮົານີ້ເປັນຜູ້ຊົງພະ
ສູດເບິ່ງຈິດໃຈ ເຮົາຈະໃຫ້ຣາງວັນແກ່ເຈົ້າທັງຫລາຍທຸກຄົນຕາມການກະທຳຂອງຕົນ
24 ແຕ່ພວກເຈົ້າທີ່ຍັງເຫລືອຢູ່ທີ່ເມືອງທົວເຕຣາ ຄືຜູ້ທີ່ບໍ່ໄດ້ຖືຄຳສອນນີ້ ແລະບໍ່ຮູ້ຈັກສິ່ງທີ່ເຂົາເອີ້ນວ່າຄວາມເລິກ
ລັບຂອງຊາຕານນັ້ນ ເຮົາຂໍບອກວ່າເຮົາບໍ່ເອົາພາຣະອື່ນໃດວາງໃສ່ພວກເຈົ້າ
25 ແຕ່ສິ່ງທີ່ເຈົ້າທັງຫລາຍມີຢູ່ແລ້ວນັ້ນ ຈົ່ງຍຶດຖືໄວ້ໃຫ້ໝັ້ນຈົນກວ່າເຮົາຈະມາ
26 ຜູ້ທີ່ມີຊັຍຊະນະແລະຖືກຮັກສາກິຈການຂອງເຮົາໄວ້ຈົນເຖິງທີ່ສຸດ ເຮົາຈະໃຫ້ຜູ້ນັ້ນມີອຳນາດປົກຄອງບັນດາ
ປະຊາຊາດ
27 ແລະຜູ້ນັ້ນຈະບັງຄັບບັນຊາເຂົາດ້ວຍຄ້ອນເຫລັກ ເໝືອນດັ່ງຊ່າງຫມໍ້ທຳລາຍຫມໍ້ດິນໃຫ້ແຕກໝຸ່ນເສັຽ ຕາມທີ່
ເຮົານີ້ໄດ້ຮັບອຳນາດຈາກພຣະບິດາຂອງເຮົາເໝືອນກັນ
28 ແລະເຮົາຈະປະທານດາວເພັກໃຫ້ແກ່ຜູ້ນັ້ນ
29 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ"

## 3 ຂຽນໄປເຖິງຄຣິສຕະຈັກເມືອງຊາເດ

The Message to Sardis

1 "ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກເມືອງຊາເດວ່າ, ພຣະອົງຜູ້ຊົງມີພຣະວິນຍານທັງເຈັດຂອງ
ພຣະເຈົ້າ ແລະຊົງມີດາວທັງເຈັດດວງນັ້ນ ຊົງກ່າວດັ່ງນີ້ວ່າ, "ເຮົາຮູ້ຈັກການກະທຳຂອງເຈົ້າ ເຈົ້າຜູ້ຊື່ວ່າມີຊີວິດ
ຢູ່ແຕ່ວ່າເຈົ້າຕາຍເສັຽແລ້ວ
2 ເຈົ້າຈົ່ງຕື່ນຂຶ້ນ ແລະເຊີດຊູສ່ວນທີ່ເຫລືອ ຊຶ່ງຈວນຈະຕາຍແລ້ວນັ້ນໃຫ້ແຂງແຮງຂຶ້ນ ເພາະວ່າເຮົາບໍ່ພົບການ
ກະທຳຂອງເຈົ້າສຳເຣັດດີ ຕໍ່ພຣະພັກພຣະເຈົ້າຂອງເຮົາ
3 ເຫດສັນນັ້ນເຈົ້າຈົ່ງຈຳໄວ້ວ່າເຈົ້າໄດ້ຮັບແລະໄດ້ຍິນຢ່າງໃດ ຈົ່ງຖືກຮັກສາແລະກັບໃຈເສັຽໃຫມ່ ຖ້າເຈົ້າບໍ່ຕື່ນ
ຂຶ້ນ ເຮົາຈະມາຫາເຈົ້າເຫມືອນດັ່ງຂະໂມຍ ແລະເຈົ້າຈະບໍ່ຮູ້ວ່າຍາມໃດເຮົາຈະມາຫາເຈົ້າ
4 ແຕ່ວ່າໃນເມືອງຊາເດ ເຈົ້າກໍຍັງມີຄົນຈຳນວນໜ້ອຍທີ່ບໍ່ໄດ້ເຮັດເສື້ອຜ້າຂອງຕົນເປື້ອນເປິ ຄົນເຫລົ່ານັ້ນຈະນຸ່ງ
ເຄື່ອງຂາວຍ່າງໄປກັບເຮົາ ເພາະເຂົາເປັນຄົນສົມຄວນຢູ່ແລ້ວ
5 ຜູ້ທີ່ມີຊັຍຊະນະ ຜູ້ນັ້ນຈະຫົ່ມເຄື່ອງຂາວແລະເຮົາຈະບໍ່ລຶບຊື່ຂອງຜູ້ນັ້ນອອກເສັຽຈາກທະບຽນແຫ່ງຊີວິດຈັກ
ເທື່ອ ແຕ່ເຮົາຈະຮັບຮອງຊື່ຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາ ແລະຕໍ່ຫນ້າຝູງເທວະດາຂອງພຣະອົງ
6 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ"

### ຂຽນໄປເຖິງຄຣິສຕະຈັກເມືອງຟີລາເດັນເຟັຽ

The Message to Philadelphia

7 “ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຟີລາເດັນເຟັຽວ່າ “ພຣະອົງບໍຣິສຸດ ຜູ້ສັດຈິງ ຜູ້ຊົງຖືຂໍ
ກະແຈຂອງດາວິດ ຜູ້ຊົງໄຂແລ້ວຈະບໍ່ມີຜູ້ໃດອັດ ຜູ້ຊົງອັດແລ້ວຈະບໍ່ມີຜູ້ໃດໄຂ ຊົງກ່າວດັ່ງນີ້ວ່າ,
8 “ເຮົາຮູ້ຈັກການກະທຳຂອງເຈົ້າ ເບິ່ງແມ, ເຮົາໄດ້ໃຫ້ມີປະຕູໄຂຢູ່ຕໍ່ຫນ້າເຈົ້າ ຊຶ່ງບໍ່ມີຜູ້ໃດອັດໄດ້ ເຮົາຮູ້ວ່າເຈົ້າມີ
ກຳລັງພຽງເລັກນ້ອຍ ແຕ່ກໍຍັງໄດ້ຖືຮັກສາຄຳຂອງເຮົາ ແລະບໍ່ໄດ້ປະຕິເສດນາມຂອງເຮົາ
9 ເບິ່ງແມ, ເຮົາຈະໃຫ້ພັກພວກຂອງຊາຕານທີ່ຕົວະວ່າເຂົາເອງເປັນຊາດຢິວ ແຕ່ບໍ່ໄດ້ເປັນນັ້ນ ມາຂາບລົງແທບ
ຕີນຂອງເຈົ້າ ແລະຈະໃຫ້ເຂົາຮູ້ວ່າຝ່າຍເຮົາໄດ້ຮັກເຈົ້າ
10 ເພາະວ່າເຈົ້າໄດ້ຖືຮັກສາຕາມຄຳຂອງເຮົາ ຊຶ່ງໃຫ້ມີຄວາມພຽນອົດທົນ ຝ່າຍເຮົາຈະປ້ອງກັນເຈົ້າເໝືອນກັນ
ໃຫ້ພົ້ນຈາກການທົດລອງທີ່ຈວນຈະມີມາທົ່ວໂລກ ເພື່ອຈະລອງໃຈຄົນທັງປວງທີ່ຢູ່ເໜືອຫນ້າແຜ່ນດິນ
11 ເຮົາຈະມາໃນໄວໆນີ້ ຈົ່ງຍຶດຫມັ້ນຢູ່ໃນສິ່ງທີ່ເຈົ້າມີນັ້ນ ເພື່ອບໍ່ໃຫ້ຜູ້ໃດຍາດຊີງເອົາພວງມາລັຍຂອງເຈົ້າໄປໄດ້
12 ຜູ້ທີ່ມີຊັຍຊະນະ ເຮົາຈະໃຫ້ຜູ້ນັ້ນເປັນເສົາໃນພຣະວິຫານພຣະເຈົ້າຂອງເຮົາ ແລະຜູ້ນັ້ນແຫລະ ບໍ່ອອກໄປນອກ
ພຣະວິຫານຈັກເທື່ອ ເຮົາຈະຈາຣຶກພຣະນາມແຫ່ງພຣະເຈົ້າຂອງເຮົາໃສ່ຕົວຜູ້ນັ້ນ ກັບທັງຊື່ມະຫານະຄອນ
ແຫ່ງພຣະເຈົ້າຂອງເຮົາ ຄືກຸງເຢຣູຊາເລັມໃໝ່ ຊຶ່ງລົງມາແຕ່ສວັນຈາກພຣະເຈົ້າຂອງເຮົາ ແລະເຮົາຈະຈາຣຶກ
ນາມໃໝ່ຂອງເຮົາໃສ່ຜູ້ນັ້ນເຫມືອນກັນ
13 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ”

### ຂຽນໄປເຖິງຄຣິສຕະຈັກເມືອງລາວດີເກອາ

The Message to  Laodicea

14 “ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງລາວດີເກອາວ່າ, “ພຣະອົງຜູ້ຊົງເປັນອາແມນນັ້ນ ຊົງ
ເປັນພຍານທີ່ສັດຊື່ແລະທ່ຽງທັມ ຊົງເປັນປະຖົມເຫດແຫ່ງສິ່ງສາຣະພັດຊຶ່ງພຣະເຈົ້າໄດ້ຊົງສ້າງ ໄດ້ຊົງກ່າວດັ່ງ
ນີ້ວ່າ,
15 “ເຮົາຮູ້ຈັກການກະທຳຂອງເຈົ້າ ເຈົ້າບໍ່ເຢັນບໍ່ຮ້ອນ ເຮົາຢາກໃຫ້ເຈົ້າເຢັນຫລືຮ້ອນ
16 ເພາະເຈົ້າພຽງແຕ່ອຸ່ນໆບໍ່ເຢັນບໍ່ຮ້ອນ ດັ່ງນັ້ນເຮົາຈະຄາຍເຈົ້າອອກຈາກປາກຂອງເຮົາ
17 ເພາະເຈົ້າເວົ້າວ່າ, “ຂ້ອຍຮັ່ງມີແລ້ວ ໄດ້ຊັບສິ່ງຂອງທະວີຂຶ້ນ ຂ້ອຍບໍ່ຕ້ອງການສິ່ງໃດ” ເຈົ້າບໍ່ຮູ້ວ່າເຈົ້າເປັນຄົນ
ທຸກໄຮ້ເຂັນໃຈ ເປັນຄົນໜ້າສົງສານ ເປັນຄົນຂັດສົນ ເປັນຄົນຕາບອດ ແລະເປືອຍກາຍຢູ່
18 ເຫດນັ້ນເຮົາເຕືອນສະຕິເຈົ້າໃຫ້ຊື້ຄຳທີ່ຫລອມໃຫ້ບໍຣິສຸດແລ້ວຈາກເຮົາ ເພື່ອເຈົ້າຈະໄດ້ເປັນຄົນຮັ່ງມີ ແລະໃຫ້
ເຈົ້າຊື້ເສື້ອຜ້າຂາວນຸ່ງຫົ່ມຕົວ ເພື່ອປົກບັງຄວາມລະອາຍຂອງການເປືອຍກາຍຂອງເຈົ້າບໍ່ໃຫ້ປາກົດ ແລະຊື້ຢາ
ໃສ່ຕາຂອງເຈົ້າເພື່ອເຈົ້າຈະໄດ້ເຫັນຮຸ່ງ
19 ຝ່າຍເຮົາ ເຮົາຮັກຜູ້ໃດເຮົາກໍຕິຕຽນຂ້ຽນສອນຜູ້ນັ້ນ ເຫດສັນນັ້ນ ຈົ່ງມີໃຈຮ້ອນຮົນແລະຕັ້ງໃຈເສັຽໃໝ່
20 ເບິ່ງແມ, ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ເຮົາຈະ
ຮັບປະທານອາຫານຮ່ວມກັບຜູ້ນັ້ນ ແລະຜູ້ນັ້ນຈະຮັບປະທານອາຫານຮ່ວມກັບເຮົາ
21 ຜູ້ທີ່ຊັຍຊະນະ ເຮົາຈະໃຫ້ຜູ້ນັ້ນນັ່ງກັບເຮົາເທິງບັນລັງຂອງເຮົາ ເໝືອນກັບທີ່ເຮົາມີຊັຍຊະນະແລ້ວ ແລະໄດ້ນັ່ງ
ກັບພຣະບິດາຂອງເຮົາເທິງຣາຊບັນລັງຂອງພຣະອົງ
22 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົບກ່າວແກ່ຄຣິສຕະຈັກທັງຫລາຍ”

## 4 ການນະມັສການໃນສວັນ

The Heavenly Worship

(ອຊຢ 6:1-3)

1 ພາຍຫລັງເຫດການທັງຫລາຍນີ້ ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້ ມີປະຕູໄຂຢູ່ໃນສວັນ ແລະພຣະສຸຣະສຽງທຳອິດ
ທີ່ຂ້າພະເຈົ້າໄດ້ຍິນ ຊຶ່ງກ່າວກັບຂ້າພະເຈົ້າເໝືອນດັ່ງສຽງແກວ່າ, “ຈົ່ງຂຶ້ນມາທີ່ນີ້ ແລະເຮົາຈະສະແດງໃຫ້ເຈົ້າ
ເຫັນເຫດການທີ່ຕ້ອງເກີດຂຶ້ນໃນພາຍໜ້າ”

2 ໃນທັນໃດນັ້ນ ຂ້າພະເຈົ້າໄດ້ປະກອບໄປດ້ວຍພຣະວິນຍານ ແລະເບິ່ງແມ, ມີຣາຊບັນລັງຕັ້ງຢູ່ໃນສວັນ ມີທ່ານ
ອົງນຶ່ງປະທັບເທິງບັນລັງນັ້ນ

3 ທ່ານຜູ້ປະທັບເທິງບັນລັງນັ້ນມີລັກສະນະເໝືອນແກ້ວມະນີໂຊດ ແລະແກ້ວພິລາ ມີຮຸ້ງກິນນ້ຳລ້ອມຮອບຣາຊ
ບັນລັງນັ້ນຄ້າຍຄືແສງແກ້ວມໍຣະກົດ

4 ລ້ອມຮອບຣາຊບັນລັງນັ້ນມີບັນລັງອີກຊາວສີ່ອັນ ແລະມີຜູ້ອາວຸໂສຊາວສີ່ທ່ານນັ່ງເທິງບັນລັງເຫລົ່ານັ້ນ ທຸກ
ທ່ານນຸ່ງເຄື່ອງຂາວແລະມີພວງມາລັຍຄຳສວມຫົວ

5 ມີຟ້າແມບຮ້ອງແລະສຽງຕ່າງໆດັງອອກມາຈາກຣາຊບັນລັງນັ້ນ ແລະມີໂຄມໄຟເຈັດໜ່ວຍໄຕ້ໄວ້ຕໍ່ໜ້າຣາຊບັນ
ລັງນັ້ນ ໂຄມໄຟເຫລົ່ານັ້ນຄືວິນຍານທັງເຈັດຂອງພຣະເຈົ້າ

6 ຢູ່ຕໍ່ໜ້າຣາຊບັນລັງເປັນເໝືອນທະເລແກ້ວມະນີ ຢູ່ອ້ອມຮອບຣາຊບັນລັງທຸກດ້ານມີສັດໂລກສີ່ໂຕ ຊຶ່ງມີຕາ
ເຕັມທັງຂ້າງໜ້າແລະຂ້າງຫລັງ

7 ສັດໂຕທີນຶ່ງເໝືອນສິງ ໂຕທີສອງເໝືອນງົວນ້ອຍ ໂຕທີສາມມີໜ້າເໝືອນມະນຸດ ແລະໂຕທີສີ່ເໝືອນນົກອິນຊີ
ກຳລັງບິນ

8 ສັດທັງສີ່ໂຕ ທຸກໂຕມີປີກຫົກປີກ ແລະມີຕາເຕັມຂ້າງນອກແລະຂ້າງໃນ ສັດເຫລົ່ານັ້ນຮ້ອງຕລອດເວັນ ຕລອດ
ຄືນ ບໍ່ຢຸດບໍ່ເຊົາວ່າ, “ບໍຣິສຸດ ບໍຣິສຸດ ບໍຣິສຸດ ອົງພຣະຜູ້ເປັນເຈົ້າຜູ້ຊົງຣິດທານຸພາບສູງສຸດ ຜູ້ຊົງດຳຣົງຢູ່ໃນອະ
ດີດ ຜູ້ຊົງດຳຣົງຢູ່ໃນປັດຈຸບັນ ແລະຜູ້ຈະສະເດັດມາ”

9 ຄັນສັດເຫລົ່ານັ້ນຖວາຍຄຳສັຣເສີນ ຖວາຍພຣະກຽດ ແລະໂມທະນາພຣະຄຸນແດ່ພຣະອົງ ຜູ້ປະທັບເທິງຣາຊ
ບັນລັງ ຜູ້ຊົງມີພຣະຊົນດຳຣົງຢູ່ຕລອດໄປເປັນນິດເນື່ອໃດ

10 ເມື່ອນັ້ນບັນດາຜູ້ອາວຸໂສຊາວສີ່ທ່ານກໍຂາບລົງຖວາຍບັງຄົມພຣະອົງຜູ້ປະທັບເທິງຣາຊບັນລັງນັ້ນ ນະມັສການ
ພຣະອົງ ຜູ້ຊົງພຣະຊົນຢູ່ຕລອດໄປເປັນນິດ ແລ້ວຖອດພວງມາລັຍອອກວາງລົງຕໍ່ຫນ້າຣາຊບັນລັງຮ້ອງວ່າ,

11 “ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງຊົງສົມຄວນທີ່ຈະໄດ້ຮັບຄຳສັຣ
ເສີນ ພຣະກຽດ ແລະຣິດເດດ ເພາະວ່າພຣະອົງໄດ້ຊົງສ້າງສັພສິ່ງທັງປວງ ແລະສັພສິ່ງທັງປວງນັ້ນກໍຊົງສ້າງຂຶ້ນ
ແລ້ວ ແລະດຳຣົງຢູ່ຕາມຊອບພຣະທັຍພຣະອົງ”

## 5 ຫນັງສືມ້ວນແລະພຣະເມສານ້ອຍ

The Scroll and the Lamb

1 ໃນພຣະຫັດເບື້ອງຂວາຂອງພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງນັ້ນ ຂ້າພະເຈົ້າໄດ້ເຫັນໜັງສືມ້ວນນຶ່ງ
ຊຽນໄວ້ທັງຂ້າງໃນແລະຂ້າງນອກ ຕິຕາປະທັບໄວ້ເຈັດດວງ

2 ແລະຂ້າພະເຈົ້າໄດ້ເຫັນເທວະດາຜູ້ມີຣິດຕິນນຶ່ງປະກາດດ້ວຍສຽງອັນດັງວ່າ, “ຜູ້ໃດໜໍເປັນຜູ້ສົມຄວນຈະແກະ
ຕາປະທັບແລະມາຍມ້ວນໜັງສືມ້ວນນີ້ອອກ”

3 ບໍ່ມີຜູ້ໃດໃນສວັນ ເທິງແຜ່ນດິນໂລກ ຫລືໃຕ້ແຜ່ນດິນກໍດີ ທີ່ສາມາດມາຍໜັງສືມ້ວນນັ້ນອອກ ຫລືເບິ່ງໜັງສືນັ້ນ
ໄດ້

4 ຂ້າພະເຈົ້າໄດ້ຮ້ອງໄຫ້ຮ່ຳໄຮຫລາຍ ເພາະບໍ່ມີຜູ້ໃດສົມຄວນຈະມາຍໜັງສືນັ້ນອອກຫລືເບິ່ງໄດ້

5 ແລ້ວມີຜູ້ນຶ່ງໃນພວກອາວຸໂສນັ້ນ ບອກຂ້າພະເຈົ້າວ່າ, “ຢ່າຮ້ອງໄຫ້ ເບິ່ງແມ, ສິງແຫ່ງຕະກູນຢູດາ ໜໍ່ເຊື້ອຂອງ
ດາວິດໄດ້ຊົຍຊະນະແລ້ວ ຈຶ່ງສາມາດແກະຕາທັງເຈັດແລະມາຍໜັງສືນັ້ນອອກໄດ້”
6 ໃນລະຫວ່າງພຣະຣາຊບັນລັງກັບສັດທັງສີ່ ແລະໃນຖ້າມກາງພວກອາວຸໂສເຫລົ່ານັ້ນ ຂ້າພະເຈົ້າໄດ້ເຫັນພຣະ
ເມສານ້ອຍປະທັບຢືນຢູ່ເໝືອນຖືກຂ້າແລ້ວ ພຣະເມສານ້ອຍນັ້ນມີເຂົາເຈັດອັນ ມີຕາເຈັດໜ່ວຍຊຶ່ງເປັນວິນ
ຍານທັງເຈັດຂອງພຣະເຈົ້າ ທີ່ຊົງໃຊ້ອອກໄປທົ່ວແຜ່ນດິນໂລກ
7 ແລະພຣະເມສານ້ອຍນັ້ນໄດ້ເຂົ້າມາຮັບໜັງສືມ້ວນນັ້ນຈາກພຣະຫັດເບື້ອງຂວາຂອງພຣະອົງ ຜູ້ຊົງປະທັບເທິງ
ຣາຊບັນລັງນັ້ນ
8 ເມື່ອພຣະອົງຊົງຮັບໜັງສືນັ້ນແລ້ວ ສັດທັງສີ່ກັບພວກອາວຸໂສຊາວສີ່ທ່ານນັ້ນ ກໍຂາບລົງຖວາຍບັງຄົມພຣະເມ
ສານ້ອຍ ທຸກທ່ານຖືພິນແລະຂັນຄຳເຕັມດ້ວຍເຄື່ອງຫອມ ຊຶ່ງເປັນຄຳໄຫວ້ວອນຂອງໄພ່ພົນທັງປວງຂອງພຣະ
ເຈົ້າ
9 ເຂົາໄດ້ຮ້ອງເພງໃໝ່ວ່າ, “ພຣະອົງຊົງເປັນຜູ້ສົມຄວນຈະຊົງຮັບມ້ວນໜັງສື ແລະແກະຕາມ້ວນ ໜັງສື
ອອກເພາະວ່າພຣະອົງຊົງຖືກຂ້າແລ້ວ ແລະດ້ວຍພຣະໂລຫິດຂອງພຣະອົງນັ້ນ ພຣະອົງໄດ້ຊົງໄຖ່ມະນຸດທຸກ
ເຜົ່າທຸກພາສາທຸກຊາດແລະທຸກປະເທດສຳລັບພຣະເຈົ້າ
10 ພຣະອົງໄດ້ຊົງບັນດານໃຫ້ເຂົາເປັນຣາຊອານາຈັກ ແລະເປັນປະໂຣຫິດທີ່ປະຕິບັດພຣະເຈົ້າຂອງພວກເຮົາ
ແລະເຂົາເຫລົ່ານັ້ນຈະໄດ້ປົກຄອງແຜ່ນດິນໂລກ”
11 ແລ້ວຂ້າພະເຈົ້າໄດ້ຫລຽວເບິ່ງ ແລະໄດ້ຍິນສຽງເທວະດາ ເປັນຈຳນວນຫລວງຫລາຍນັບເປັນໂກດໆ ແສນໆ
ຊຶ່ງຢູ່ອ້ອມຮອບພຣະຣາຊບັນລັງ ຮອບສັດ ແລະຮອບຜູ້ອາວຸໂສທັງຫລາຍນັ້ນ
12 ຮ້ອງສຽງດັງວ່າ, “ພຣະເມສານ້ອຍຜູ້ຖືກຂ້າແລ້ວນັ້ນ ເປັນຜູ້ທີ່ສົມຄວນໄດ້ຮັບຣິດເດດ ຊັບສົມບັດ ສະຕິປັນຍາ
ອານຸພາບ ກຽດຕິຍົດ ສະງ່າຣາສີ ແລະຄຳສັຣເສີນ”
13 ແລະຂ້າພະເຈົ້າໄດ້ຍິນສຽງສິ່ງທີ່ມີຊີວິດທັງໝົດ ທັງໃນສວັນ ເທິງແຜ່ນດິນໂລກ ໃຕ້ແຜ່ນດິນ ແລະໃນມະຫາ
ສມຸດ ຄືສິ່ງທັງປວງຊຶ່ງຢູ່ໃນທີ່ນັ້ນຮ້ອງວ່າ, “ຂໍໃຫ້ຄຳສັຣເສີນ ກຽດຕິຍົດ ສະງ່າຣາສີ ແລະຣິດທານຸພາບ ຈົ່ງມີ
ແດ່ພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງ ແລະແດ່ພຣະເມສານ້ອຍຕລອດໄປເປັນນິດ”
14 ສັດທັງສີ່ນັ້ນກໍຮ້ອງວ່າ, “ອາແມນ” ແລະຜູ້ອາວຸໂສເຫລົ່ານັ້ນກໍຂາບລົງນະມັສການ

## 6 ຕາປະທັບທັງເຈັດ

The Seven Seals

1 ເມື່ອພຣະເມສານ້ອຍຊົງແກະຕາດວງນຶ່ງໃນເຈັດດວງນັ້ນອອກແລ້ວ ຂ້າພະເຈົ້າໄດ້ເບິ່ງແລະໄດ້ຍິນສັດໂຕນຶ່ງ
ໃນສີ່ໂຕນັ້ນຮ້ອງສຽງດັງເໝືອນສຽງຟ້າຮ້ອງວ່າ, “ມາເທາະ”
2 ຂ້າພະເຈົ້າໄດ້ເບິ່ງແລະດັ່ງນີ້, ມີມ້າສີຂາວໂຕນຶ່ງອອກມາ ຜູ້ທີ່ຂີ່ມ້ານັ້ນຖືທະນູ ແລະໄດ້ຮັບພຣະຣາຊທານ
ພວງມາລັຍ ແລ້ວກໍຂີ່ມ້າອອກໄປຢ່າງມີຊັຍເພື່ອຈະຊົຍຊະນະ
3 ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີສອງນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດໂຕທີ່ສອງຮ້ອງວ່າ,
“ມາເທາະ”
4 ແລະມີມ້າສີແດງເຂັ້ມໂຕນຶ່ງອອກມາອີກ ຜູ້ທີ່ຂີ່ມ້າໂຕນີ້ໄດ້ຮັບພຣະຣາຊອະນຸຍາດໃຫ້ນຳສັນຕິສຸກໄປຈາກ
ໂລກ ເພື່ອໃຫ້ຄົນທັງປວງຮົບຣາຂ້າຟັນກັນ ແລະທັງໄດ້ພຣະຣາຊທານດາບໃຫຍ່ດວງນຶ່ງໃຫ້ແກ່ຜູ້ນັ້ນ
5 ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີສາມນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດໂຕທີສາມຮ້ອງວ່າ,
“ມາເທາະ” ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້, ມີມ້າສີດຳໂຕນຶ່ງອອກມາ ຜູ້ທີ່ຂີ່ມ້ານັ້ນຖືຄັນຊັ່ງ

6 ຂ້າພະເຈົ້າໄດ້ຍິນເໝືອນກັບສຽງທີ່ດັງອອກມາຈາກຖ້າມກາງສັດທັງສີ່ນັ້ນວ່າ, "ເຂົ້າບເລຣາຄາລິດນຶ່ງຕໍ່ນຶ່ງເດ
ນາຣິອົນ ເຂົ້າເດືອຍສາມລິດຕໍ່ນຶ່ງເດນາຣິອົນ ແຕ່ຢ່າເຮັດອັນຕະລາຍຕໍ່ນໍ້າມັນແລະເຫລົ້າແວງ"
7 ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີສີ່ຮ້ອງວ່າ, "ມາເທາະ"
8 ຂ້າພະເຈົ້າໄດ້ເຫັນ ແລະດັ່ງນີ້, ມີມ້າສີຂຽວອ່ອນໂຕນຶ່ງອອກມານັ້ນແລ້ວ ຜູ້ທີ່ຂີ່ມ້ານັ້ນມີຊື່ວ່າ ມັດຈຸຣາຊ ແລະ
ແດນມໍຣະນາກໍຕິດຕາມມານໍາ ເຂົາທັງສອງໄດ້ຮັບພຣະຣາຊທານອໍານາດລ້າງຜານແຜ່ນດິນໂລກໄດ້ນຶ່ງສ່ວນ
ສີ່ດ້ວຍຄົມດາບ ດ້ວຍຄວາມອຶດຢາກ ດ້ວຍຄວາມຕາຍ ແລະດ້ວຍສັດຮ້າຍຕ່າງໆໃນແຜ່ນດິນໂລກ
9 ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີຫ້ານັ້ນແລ້ວ ຂ້າພະເຈົ້າໄດ້ເຫັນດວງວິນຍານຢູ່ໃຕ້ແທ່ນບູຊາ
ເປັນວິນຍານຂອງຄົນທັງຫລາຍທີ່ຖືກຂ້າເພາະພຣະທັມຂອງພຣະເຈົ້າ ແລະເພາະຄໍາພຍານທີ່ເຂົາຍຶດຖືນັ້ນ
10 ເຂົາເຫລົ່ານັ້ນໄດ້ຮ້ອງດັງຂຶ້ນວ່າ, "ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ບໍຣິສຸດແລະທ່ຽງແທ້ ຍັງດົນປານໃດໜໍ ພຣະອົງ
ຈຶ່ງຈະຊົງພິພາກສາຕອບສນອງຄົນທັງຫລາຍທີ່ຢູ່ເທິງແຜ່ນດິນໂລກທີ່ໄດ້ຂ້າພວກຂ້າພຣະອົງນັ້ນ"
11 ແລ້ວເຂົາທຸກຄົນໄດ້ຮັບພຣະຣາຊທານເສື້ອສີຂາວແລະຊົງສັ່ງໃຫ້ເຂົາລໍໄປຈັກໜ້ອຍ ຈົນກວ່າຈໍານວນເພື່ອນ
ຂ້ອຍໃຊ້ແລະພີ່ນ້ອງຂອງເຂົາຈະຄົບຖ້ວນແລ້ວ ຄືພວກທີ່ຈວນຈະຖືກຂ້າເໝືອນກັບເຂົານັ້ນ
12 ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີຫົກນັ້ນແລ້ວ ຂ້າພະເຈົ້າໄດ້ເບິ່ງແລະດັ່ງນີ້, ເກີດແຜ່ນດິນຫວັ່ນ
ໄຫວອັນໃຫຍ່ ດວງອາທິດກໍເກີດມືດດໍາເໝືອນດັ່ງຜ້າຂົນສັດຫຍາບ ດວງຈັນວັນເພັງກໍກັບເກີດເປັນສີເລືອດ
13 ດວງດາວທັງຫລາຍໃນທ້ອງຟ້າກໍຕົກລົງເທິງແຜ່ນດິນເໝືອນກັບຕົ້ນເດື່ອເທດທີ່ຖືກລົມກ້າພັດຈົນໝາກທີ່ຍັງບໍ່
ທັນສຸກຫລົ່ນລົງໝົດ
14 ທ້ອງຟ້າກໍຫົດເຂົ້າເສັຽເໝືອນດັ່ງຫນັງສືທີ່ເຂົາມ້ວນ ພູທຸກໜ່ວຍແລະເກາະທຸກເກາະກໍເຄື່ອນໄປຈາກບ່ອນ
ເດີມ
15 ແລ້ວກະສັດທັງຫລາຍໃນແຜ່ນດິນໂລກ ພວກເຈົ້ານາຍ ພວກນາຍພັນນາຍພົນ ພວກເສດຖີ ພວກຜູ້ມີອໍານາດ
ແລະທຸກຄົນທັງທີ່ເປັນຂ້ອຍຂ້າແລະມີເສຣີກໍພາກັນໄປລີ້ຊ່ອນຢູ່ໃນຖໍ້າແລະໃນຫວ່າງຫີນຕາມພູ
16 ເຂົາຮ້ອງບອກພູແລະໂງ່ນຫີນວ່າ, "ຂໍໃຫ້ເນີ້ງມາບັງພວກເຮົາໄວ້ ໃຫ້ພົ້ນຈາກພຣະພັກຂອງພຣະອົງ ຜູ້ຊົງປະ
ທັບເທິງພຣະຣາຊບັນລັງແລະຈາກພຣະພິໂຣດຂອງພຣະເມສານ້ອຍນັ້ນ
17 ເພາະວ່າວັນສໍາຄັນແຫ່ງພຣະພິໂຣດຂອງພຣະອົງໄດ້ມາເຖິງແລ້ວ ແລະຜູ້ໃດໜໍ ຈະອາດທົນຢູ່ໄດ້"

## 7 ແສນສີ່ໝື່ນສີ່ພັນຄົນຮັບການປະທັບຕາ

The 144,000 of Israel Sealed

1 ຫລັງຈາກນັ້ນຂ້າພະເຈົ້າໄດ້ເຫັນເທວະດາສີ່ຕົນ ຢືນຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ ຫ້າມລົມໃນແຜ່ນດິນທັງ
ສີ່ທິດໄວ້ບໍ່ໃຫ້ພັດມາໃສ່ບົກ ໃສ່ທະເລ ຫລືຕົ້ນໄມ້ໃດໆ
2 ແລ້ວຂ້າພະເຈົ້າໄດ້ເຫັນເທວະດາອີກຕົນນຶ່ງ ປາກົດຂຶ້ນມາຈາກທິດຕາເວັນອອກ ຖືຕາປະທັບຂອງພຣະເຈົ້າຜູ້
ຊົງພຣະຊົນຢູ່ ເທວະດາຕົນນັ້ນປະກາດສຽງດັງແກ່ເທວະດາທັງສີ່ ຜູ້ຊຶ່ງໄດ້ຮັບພຣະຣາຊທານອໍານາດໃຫ້ເຮັດ
ອັນຕະລາຍແກ່ແຜ່ນດິນແລະທະເລນັ້ນ
3 ວ່າ, "ຢ່າເຮັດອັນຕະລາຍແກ່ແຜ່ນດິນ ແກ່ທະເລ ຫລືຕົ້ນໄມ້ ຈົນກວ່າເຮົາຈະໄດ້ປະທັບຕາໄວ້ທີ່ໜ້າຜາກບັນ
ດາຂ້ອຍຂ້າຂອງພຣະເຈົ້າຂອງເຮົາເສັຽກ່ອນ"
4 ແລະຂ້າພະເຈົ້າໄດ້ຍິນຈໍານວນຂອງຜູ້ທີ່ໄດ້ຮັບປະທັບຕາແລ້ວ ຄືຜູ້ທີ່ມາຈາກທຸກຕະກູນໃນພວກອິສຣາເອນ ມີ
ແສນສີ່ໝື່ນສີພັນຄົນ
5 ຈາກຕະກູນຢູດາ ມີໝື່ນສອງພັນຄົນ ຈາກຕະກູນຣູເບນ ໝື່ນສອງພັນຄົນ ຈາກຕະກູນກາດ ໝື່ນສອງພັນຄົນ

6 ຈາກຕະກູນອາເຊີ ໝື່ນສອງພັນຄົນ ຈາກຕະກູນເນັຟທາລີ ໝື່ນສອງພັນຄົນ ຈາກຕະກູນມານັສເຊ ໝື່ນສອງ
ພັນຄົນ
7 ຈາກຕະກູນຊີເມໂອນ ໝື່ນສອງພັນຄົນ ຈາກຕະກູນເລວີ ໝື່ນສອງພັນຄົນ ຈາກຕະກູນອິສຊາຄາ ໝື່ນສອງພັນ
ຄົນ
8 ຈາກຕະກູນເຊບູລູນ ໝື່ນສອງພັນຄົນ ຈາກຕະກູນໂຢເຊັບ ໝື່ນສອງພັນຄົນ ຈາກຕະກູນເບັນຢາມິນ ໝື່ນສອງ
ພັນຄົນ

### ມວນຊົນຈາກທຸກປະຊາຊາດ

The Multitude From Every Nation

9 ຫລັງຈາກນັ້ນຂ້າພະເຈົ້າເບິ່ງ ແລະດັ່ງນີ້, ມີຝູງຄົນຫລວງຫລາຍເຫລືອຄະນານັບ ມາຈາກທຸກປະເທດ ທຸກຕະ
ກູນ ທຸກຊາດ ແລະທຸກພາສາ ຄົນເຫລົ່ານັ້ນນຸ່ງເຄື່ອງສີຂາວ ຖືກ້ານຕານ ຢືນຢູ່ຕໍ່ໜ້າພຣະຣາຊບັນລັງແລະຕໍ່
ພຣະພັກພຣະເມສານ້ອຍນັ້ນ
10 ຮ້ອງສຽງດັງວ່າ, “ຄວາມລອດພົ້ນຂຶ້ນຢູ່ກັບພຣະເຈົ້າຂອງພວກເຮົາ ຜູ້ຊົງປະທັບເທິງພຣະຣາຊບັນລັງ ແລະຂຶ້ນ
ຢູ່ກັບພຣະເມສານ້ອຍ”
11 ແລະເທວະດາທັງປວງທີ່ຢືນອ້ອມພຣະຣາຊບັນລັງ ອ້ອມອາວຸໂສ ແລະອ້ອມສັດທັງສີ່ນັ້ນ ກົ້ມລົງຕໍ່ໜ້າພຣະ
ຣາຊບັນລັງ ນະມັສການພຣະເຈົ້າ
12 ໂດຍກ່າວວ່າ, “ອາແມນ ຄວາມສັຣເສີນ ສະງ່າຣາສີ ສະຕິປັນຍາ ຄຳໂມທະນາ ພຣະກຽດຕິຍົດ ອຳນາດ ແລະ
ຣິດເດດ ຈົ່ງມີແດ່ພຣະເຈົ້າຂອງພວກຂ້າພຣະອົງຕລອດໄປເປັນນິດ ອາແມນ”
13 ແລ້ວຜູ້ນຶ່ງໃນພວກອາວຸໂສນັ້ນຖາມຂ້າພະເຈົ້າວ່າ, “ຄົນທີ່ນຸ່ງເຄື່ອງສີຂາວເຫລົ່ານັ້ນແມ່ນໃຜ ແລະມາແຕ່ໃສ”
14 ຂ້າພະເຈົ້າໄດ້ຕອບຜູ້ນັ້ນວ່າ, “ທ່ານເອີຍ, ທ່ານກໍຊາບຢູ່ແລ້ວ” ຜູ້ນັ້ນຈຶ່ງບອກຂ້າພະເຈົ້າວ່າ, “ຄົນເຫລົ່ານີ້
ແຫລະ, ທີ່ມາຈາກຄວາມທຸກຂະເວທນາອັນໃຫຍ່ ເຂົາໄດ້ຊຳຣະລ້າງເສື້ອຜ້າຂອງເຂົາໃຫ້ຂາວສະອາດດ້ວຍ
ພຣະໂລຫິດຂອງພຣະເມສານ້ອຍນັ້ນ
15 ເພາະເຫດນັ້ນເຂົາຈຶ່ງໄດ້ຢູ່ຕໍ່ໜ້າພຣະຣາຊບັນລັງຂອງພຣະເຈົ້າ ແລະປະຕິບັດພຣະອົງໃນພຣະວິຫານຂອງ
ພຣະອົງທັງກາງເວັນແລະກາງຄືນ ແລະພຣະອົງຜູ້ຊົງປະທັບເທິງພຣະຣາຊບັນລັງນັ້ນ ຈະຊົງສະຖິດຢູ່ນຳແລະ
ປົກປ້ອງຄຸ້ມຄອງເຂົາ
16 ຕໍ່ໄປເຂົາຈະບໍ່ອຶດເຂົ້າຢາກນ້ຳອີກຈັກເທື່ອ ແສງແດດແລະຄວາມຮ້ອນຢ່າງນຶ່ງຢ່າງໃດຈະບໍ່ສ່ອງຖືກເຂົາ
17 ເພາະວ່າພຣະເມສານ້ອຍ ທີ່ປະທັບຢູ່ຖ້າມກາງພຣະຣາຊບັນລັງນັ້ນ ຈະຊົງເປັນຜູ້ດູແລເຂົາແລະຈະຊົງນຳເຂົາ
ໄປເຖິງນ້ຳພຸອັນປະກອບດ້ວຍຊີວິດ ແລະພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງເຂົາ”

## 8 ຕາປະທັບດວງທີເຈັດ

The Seventh Seal and the Golden Censer

1 ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີເຈັດ ຄວາມສັງດຽບກໍເກີດຂຶ້ນໃນສວັນປະມານເຄິ່ງຊົ່ວໂມງ
2 ແລ້ວຂ້າພະເຈົ້າກໍເຫັນເທວະດາເຈັດຕົນທີ່ຢືນຢູ່ຕໍ່ພຣະພັກພຣະເຈົ້ານັ້ນ ໄດ້ຮັບພຣະຣາຊທານແກ່ເຈັດອັນ
3 ມີເທວະດາອີກຕົນນຶ່ງຖືໝໍ້ຄຳໜ່ວຍນຶ່ງອອກມາຢືນຢູ່ຕໍ່ໜ້າແທ່ນ ໄດ້ຮັບພຣະຣາຊທານເຄື່ອງຫອມຈຳນວນ
ຫລາຍ ເພື່ອຈະຖວາຍຮ່ວມກັບຄຳໄຫວ້ວອນຂອງໄພ່ພົນທັງປວງຂອງພຣະເຈົ້າ ເທິງແທ່ນຄຳທີ່ຢູ່ຕໍ່ໜ້າພຣະ
ຣາຊບັນລັງນັ້ນ

4 ແລະຄວັນເຄື່ອງຫອມນັ້ນກໍລອຍຂຶ້ນໄປ ພ້ອມກັບຄໍາໄຫວ້ວອນຂອງພວກໄພ່ພົນຂອງພຣະເຈົ້າ ຈາກມືເທວະ
ດາຊຶ່ງຢືນຢູ່ຕໍ່ພຣະພັກພຣະເຈົ້າ
5 ແລ້ວເທວະດາຕົນນັ້ນໄດ້ຖືໝໍ້ໄປເອົາໄຟຈາກແທ່ນໃສ່ໃຫ້ເຕັມ ໂຍນໝໍ້ນັ້ນລົງເທິງແຜ່ນດິນໂລກ ກໍເກີດມີສຽງ
ຟ້າຮ້ອງ ສຽງຕ່າງໆ ມີຟ້າແມບແລະແຜ່ນດິນຫວັ່ນໄຫວ

## ແກທັງເຈັດ

The Seven Trumpets

6 ແລະເທວະດາຕົນທີ່ຖືແກທັງເຈັດນັ້ນ ຕ່າງກໍຕຽມພ້ອມທີ່ຈະເປົ່າ
7 ເມື່ອເທວະດາຕົນແຣກເປົ່າແກຂຶ້ນ ໝາກເຫັບແລະໄຟປົນເລືອດຖືກຖິ້ມລົງມາຍັງແຜ່ນດິນ ແຜ່ນດິນໂລກຖືກ
ໄໝ້ເສັຽນຶ່ງສ່ວນສາມ ຕົ້ນໄມ້ກໍຖືກໄມ້ເສັຽນຶ່ງສ່ວນສາມ ແລະຫຍ້າຂຽວສົດຖືກໄໝ້ເສັຽທັງໝົດ
8 ເມື່ອເທວະດາຕົນທີສອງເປົ່າແກຂຶ້ນ ກໍມີສິ່ງນຶ່ງເໝືອນພູໜ່ວຍໃຫຍ່ທີ່ໄຟກໍາລັງໄໝ້ຢູ່ ຖືກຖິ້ມລົງໃນທະເລ
ແລະທະເລນັ້ນໄດ້ກາຍເປັນເລືອດເສັຽນຶ່ງສ່ວນສາມ
9 ສາຣະພັດໃນທະເລທີ່ມີຊີວິດຢູ່ກໍຕາຍເສັຽນຶ່ງສ່ວນສາມ ແລະບັນດາເຮືອສະເພົາກໍຖືກທໍາລາຍເສັຽນຶ່ງສ່ວນ
ສາມ
10 ເມື່ອເທວະດາຕົນທີສາມເປົ່າແກຂຶ້ນ ກໍມີດາວໃຫຍ່ດວງນຶ່ງລຸກເປັນໄຟເໝືອນກະບອງຕົກຈາກທ້ອງຟ້າ ດາວ
ນັ້ນຕົກໃສ່ແມ່ນໍ້ານຶ່ງສ່ວນສາມ ແລະຕົກໃສ່ນໍ້າພຸທັງຫລາຍ
11 ດາວດວງນີ້ມີຊື່ວ່າ ຂົມ (Wormwood) ຣົດຂອງນໍ້າຈຶ່ງກາຍເປັນຣົດຂົມນຶ່ງສ່ວນສາມ ແລະຄົນຈໍານວນຫລວງ
ຫລາຍໄດ້ຕາຍເພາະນໍ້ານັ້ນມີຣົດຂົມ
12 ເມື່ອເທວະດາຕົນທີສີ່ເປົ່າແກຂຶ້ນ ດວງອາທິດກໍຖືກທໍາລາຍເສັຽນຶ່ງສ່ວນສາມ ດວງຈັນແລະດວງດາວທັງຫລາຍ
ກໍເໝືອນກັນ ຈຶ່ງມືດໄປເຖິງນຶ່ງສ່ວນສາມ ກາງເວັນບໍ່ສວ່າງນຶ່ງສ່ວນສາມ ແລະກາງຄືນກໍເໝືອນກັນ
13 ແລ້ວຂ້າພະເຈົ້າກໍເບິ່ງ ແລະໄດ້ຍິນນົກອິນຊີໂຕນຶ່ງທີ່ບິນຢູ່ໃນທ້ອງຟ້າ ຮ້ອງດັງຂຶ້ນວ່າ, “ວິບັດ ວິບັດ ວິບັດຈະມີ
ແກ່ຄົນທັງຫລາຍທີ່ຢູ່ເທິງແຜ່ນດິນໂລກ ເພາະສຽງແກທີ່ເຫລືອ ຊຶ່ງເທວະດາສາມຕົນຈວນຈະເປົ່ານັ້ນ”

## 9

Chapter 9

1 ເມື່ອເທວະດາຕົນທີຫ້າເປົ່າແກຂຶ້ນ ຂ້າພະເຈົ້າກໍເຫັນດາວດວງນຶ່ງຕົກຈາກຟ້າລົງມາຍັງແຜ່ນດິນໂລກ ໄດ້ຮັບ
ພຣະຣາຊທານຂໍກະແຈສໍາລັບປ່ອງເຫວເລິກ
2 ເມື່ອດາວດວງນັ້ນໄຂປ່ອງເຫວອອກ ກໍມີຄວັນພຸ່ງຂຶ້ນມາຈາກເຫວນັ້ນເໝືອນຄວັນທີ່ເຕົາໃຫຍ່ ດວງອາທິດ
ແລະອາກາດກໍມືດໄປເພາະເຫດຄວັນທີ່ຂຶ້ນມາຈາກເຫວນັ້ນ
3 ມີຝູງຕັກແຕນບິນອອກຈາກຄວັນນັ້ນມາຍັງແຜ່ນດິນໂລກ ພຣະເຈົ້າຊົງພຣະຣາຊທານອໍານາດແກ່ຕັກແຕນນັ້ນ
ເໝືອນກັບອໍານາດແມງງອດທີ່ແຜ່ນດິນໂລກ
4 ພຣະເຈົ້າຊົງຫ້າມມັນບໍ່ໃຫ້ທໍາຮ້າຍຫຍ້າເທິງແຜ່ນດິນໂລກ ສິ່ງຂຽວສົດຫລືຕົ້ນໄມ້ໃດໆ ແຕ່ໃຫ້ທໍາຮ້າຍຄົນ
ເຫລົ່ານັ້ນທີ່ບໍ່ມີປະທັບຕາຂອງພຣະເຈົ້າທີ່ໜ້າຜາກຂອງເຂົາເທົ່ານັ້ນ
5 ພຣະອົງບໍ່ຊົງອະນຸຍາດໃຫ້ມັນຂ້າຄົນເຫລົ່ານັ້ນ ແຕ່ໃຫ້ທໍຣະມານເຂົາໃນລະຫວ່າງຫ້າເດືອນ ການທໍຣະມານ
ນັ້ນເໝືອນກັບແມງງອດຕອດ
6 ໃນລະຫວ່າງນັ້ນຄົນທັງຫລາຍຈະສແວງຫາຄວາມຕາຍ ແຕ່ຈະບໍ່ພົບຈັກເທື່ອ ເຂົາປາຖນາຈະຕາຍ ແຕ່ຄວາມ
ຕາຍຈະປົບໜີໄປຈາກເຂົາ

7 ລັກສະນະອາການຕັກແຕນເຫລົ່ານັ້ນເໝືອນມ້າທີ່ຫ້າງໄວ້ແລ້ວສຳລັບການເສິກ ເທິງຫົວມັນມີສິ່ງນຶ່ງເໝືອນ
ພວງມາລັຍຄຳ ໜ້າຂອງມັນເໝືອນໜ້າມະນຸດ
8 ຜົມມັນເໝືອນຜົມຜູ້ຍິງ ແລະແຂ້ວມັນເໝືອນແຂ້ວສິງ
9 ມັນມີສິ່ງນຶ່ງເໝືອນເຄື່ອງເຫລັກປ້ອງກັນໜ້າເອິກ ສຽງປີກຂອງມັນເໝືອນສຽງຣົດທຽມມ້າຈຳນວນຫລາຍແລ່ນ
ເຂົ້າຣົບເສິກ
10 ມັນມີຫາງເໝືອນຫາງແມງງອດ ມີໄລຕອດໃນຫາງນັ້ນ ມັນມີອຳນາດທີ່ຈະທຳຮ້າຍມະນຸດຕລອດຫ້າເດືອນ
11 ມັນມີກະສັດອົງນຶ່ງຄຸ້ມຄອງ ກະສັດນັ້ນຄືບໍຣິວານຂອງເຫວເລິກນັ້ນ ບໍຣິວານນັ້ນຕາມພາສາເຮັບເຣີເອີ້ນວ່າ ອາ
ໂປລີໂອນ
12 ວິບັດອັນຕົ້ນຜ່ານໄປແລ້ວ ເບິ່ງແມ, ຍັງຈະມີວິບັດສອງປະການທີ່ຈະເກີດຂຶ້ນໃນພາຍໜ້າ
13 ເມື່ອເທວະດາຕົນທີຫົກເປົ່າແກຂຶ້ນ ຂ້າພະເຈົ້າໄດ້ຍິນສຽງອອກມາຈາກຮູບເຂົາທີ່ແຈທັງສີ່ຂອງແທ່ນຄຳ ຊຶ່ງຢູ່ຕໍ່
ພຣະພັກພຣະເຈົ້ານັ້ນ
14 ສັ່ງແກ່ເທວະດາຕົນທີຫົກທີ່ຖືແກນັ້ນວ່າ, “ຈົ່ງແກ້ປ່ອຍເທວະດາທັງສີ່ ຊຶ່ງຖືກມັດໄວ້ທີ່ແມ່ນໍ້າເອີຟຣາດນັ້ນເສັຽ”
15 ເທວະດາເຫລົ່ານັ້ນຖືກປ່ອຍໄປແລ້ວ ຄືເທວະດາທັງສີ່ທີ່ພຣະເຈົ້າຊົງຈັດໄວ້ແລ້ວສຳລັບຊົ່ວໂມງ ວັນ ເດືອນ
ແລະປີນັ້ນ ເພື່ອໄປຂ້າມະນຸດນຶ່ງສ່ວນສາມເສັຽ
16 ມີພົນທະຫານມ້າສອງຮ້ອຍລ້ານຄົນ ຕາມຈຳນວນທີ່ຂ້າພະເຈົ້າໄດ້ຍິນ
17 ໃນນິມິດທີ່ຂ້າພະເຈົ້າໄດ້ເຫັນນັ້ນກໍເປັນດັ່ງນີ້ ມີຝູງມ້າ ແລະຜູ້ທີ່ຂີ່ມ້ານັ້ນມີເຄື່ອງປ້ອງກັນເອິກເປັນສີໄຟ ສີນໍ້າ
ເງິນ ແລະມີມາດ ຫົວມ້າເຫລົ່ານັ້ນເໝືອນຫົວສິງ ມີໄຟແລະຄວັນກັບມາດພຸ່ງອອກມາຈາກປາກມັນ
18 ມະນຸດຖືກຂ້າເສັຽນຶ່ງສ່ວນສາມດ້ວຍພັຍອັນຕະຣາຍສາມຢ່າງນີ້ຄື ໄຟ ຄວັນ ແລະມາດ ທີ່ພຸ່ງອອກມາຈາກ
ປາກມ້ານັ້ນ
19 ເພາະຣິດຂອງມ້ານັ້ນມີຢູ່ໃນປາກ ແລະໃນຫາງຂອງມັນຄືກັບງູ ແລະມີຫົວ ສິ່ງເຫລົ່ານີ້ເຂົາໃຊ້ທຳຮ້າຍມະນຸດ
ໄດ້
20 ສ່ວນມະນຸດທັງຫລາຍທີ່ຍັງເຫລືອຢູ່ ຊຶ່ງບໍ່ໄດ້ຖືກຂ້າດ້ວຍພັຍອັນຕະຣາຍເຫລົ່ານັ້ນ ກໍບໍ່ໄດ້ກັບໃຈເສັຽໃໝ່ຈາກ
ກິຈການທີ່ຕົນໄດ້ເຮັດ ບໍ່ໄດ້ເລີກບູຊາຜີ ບູຊາພຣະທຽມທີ່ເຮັດດ້ວຍຄຳ ເງິນ ທອງເຫລືອງ ດ້ວຍຫີນແລະໄມ້ ຊຶ່ງ
ບໍ່ສາມາດຈະເຫັນ ຈະໄດ້ຍິນ ຫລືຈະຍ່າງໄປໄດ້
21 ເຂົາບໍ່ໄດ້ກັບໃຈເສັຽໃໝ່ ເລີກຈາກການຂ້າຟັນກັນ ການເຊື່ອເວດມົນຄາຖາ ການຜິດຊາຍຍິງ ແລະການລັກ
ຂອງຕົນ

## 10 ເທວະດາແລະໜັງສືມ້ວນນ້ອຍ

The Angel with the Little Scroll

1 ຂ້າພະເຈົ້າໄດ້ເຫັນເທວະດາມີຣິດອີກຕົນນຶ່ງລົງມາຈາກສວັນ ມີເມກປົກຄຸມຕົວໄວ້ແລະມີຮຸ້ງກິນນໍ້າຢູ່ເທິງຫົວ
ໜ້າຂອງທ່ານເໝືອນດວງອາທິດແລະຂາກໍເໝືອນເຕົາໄຟ
2 ທ່ານຖືໜັງສືມ້ວນນ້ອຍນຶ່ງມ້ວນທີ່ພີຢູ່ໃນມື ຕີນເບື້ອງຂວາຢຽບນໍ້າທະເລແລະຕີນເບື້ອງຊ້າຍຢຽບບົກ
3 ທ່ານຮ້ອງດັງເໝືອນດັ່ງສິງຮ້ອງ ເມື່ອທ່ານຮ້ອງ ສຽງຟ້າຮ້ອງທັງເຈັດກໍດັງຂຶ້ນ
4 ເມື່ອສຽງຟ້າຮ້ອງທັງເຈັດດັງຂຶ້ນແລ້ວ ຂ້າພະເຈົ້າກໍລົງມືຈະຂຽນ ແຕ່ຂ້າພະເຈົ້າໄດ້ຍິນພຣະສຸຣະສຽງຈາກສວັນ
ຊົງກ່າວວ່າ, “ສິ່ງທີ່ຟ້າຮ້ອງທັງເຈັດໄດ້ຮ້ອງແລ້ວນັ້ນ ຈົ່ງປະທັບຕາອັດໄວ້ ຢ່າໄດ້ຂຽນ”
5 ຝ່າຍເທວະດາຕົນທີ່ຂ້າພະເຈົ້າໄດ້ເຫັນຢືນເທິງທະເລແລະເທິງບົກນັ້ນໄດ້ຍໍມືຂວາຂຶ້ນໃສ່ຟ້າ

6 ແລະສາບານໂດຍອ້າງອອກພຣະນາມຂອງພຣະອົງຜູ້ຊົງຢູ່ເປັນນິດ ຜູ້ຊົງສ້າງຟ້າສວັນແລະສັພສິ່ງທີ່ຢູ່ໃນສວັນ
ນັ້ນ ຊົງສ້າງແຜ່ນດິນໂລກແລະສັພສິ່ງທີ່ມີຢູ່ໃນແຜ່ນດິນໂລກນັ້ນ ແລະຊົງສ້າງທະເລກັບສັພສິ່ງທີ່ມີຢູ່ໃນທະເລ
ນັ້ນ ວ່າຈະບໍ່ມີການຊ້ານານອີກຕໍ່ໄປແລ້ວ
7 ແຕ່ໃນເວລາເທວະດາຕົນທີ່ເຈັດອອກສຽງ ຄືເວລາເປົ່າແກນັ້ນ ຄວາມເລິກລັບຂອງພຣະເຈົ້າ ທີ່ພຣະອົງໄດ້ຊົງ
ປະກາດເປັນຂ່າວປະເສີດແກ່ພວກຂ້ອຍໃຊ້ຂອງພຣະອົງຄືພວກຜູ້ທຳນວາຍນັ້ນກໍຈະສຳເຣັດ
8 ແລ້ວພຣະສຸຣະສຽງທີ່ຂ້າພະເຈົ້າໄດ້ຍິນຈາກສວັນນັ້ນຊົງກ່າວກັບຂ້າພະເຈົ້າອີກວ່າ, "ຈົ່ງໄປຮັບເອົາໜັງສືມ້ວນ
ນັ້ນ ທີ່ພີຢູ່ໃນມືຂອງເທວະດາຕົນທີ່ຢືນຢູ່ເທິງທະເລແລະເທິງບົກນັ້ນ"
9 ຂ້າພະເຈົ້າຈຶ່ງໄປຫາເທວະດາຕົນນັ້ນ ແລະຂໍເອົາໜັງສືມ້ວນນ້ອຍນັ້ນ ທ່ານໄດ້ຕອບຂ້າພະເຈົ້າວ່າ, "ເອົາໄປ
ກິນເສັຽ ມັນຈະເຮັດໃຫ້ທ້ອງເຈົ້າຂົມ ແຕ່ໃນປາກຂອງເຈົ້າຈະຫວານເໝືອນນໍ້າເຜິ້ງ"
10 ຂ້າພະເຈົ້າໄດ້ຮັບເອົາໜັງສືມ້ວນນ້ອຍຈາກມືເທວະດາແລ້ວກໍກິນເສັຽ ໃນປາກຂ້າພະເຈົ້າມັນກໍຫວານເໝືອນ
ນໍ້າເຜິ້ງ ແຕ່ເມື່ອກິນແລ້ວທ້ອງຂອງຂ້າພະເຈົ້າກໍຂົມ
11 ແລ້ວຂ້າພະເຈົ້າໄດ້ຮັບສັ່ງວ່າ, "ເຈົ້າຕ້ອງທຳນວາຍອີກເຖິງເຣື່ອງຊົນຊາດທັງຫລາຍ ບັນດາປະຊາຊາດ ພາສາ
ແລະກະສັດທັງຫລາຍ"

## 11 ພຍານທັງສອງ

The Two Witnesses

1 ມີຜູ້ນຶ່ງໄດ້ເອົາໄມ້ແທກອັນນຶ່ງເໝືອນໄມ້ຄ້ອນເທົ້າໃຫ້ຂ້າພະເຈົ້າ ແລ້ວສັ່ງວ່າ, "ຈົ່ງລຸກຂຶ້ນໄປແທກພຣະວິຫານ
ຂອງພຣະເຈົ້າກັບແທ່ນບູຊາ ແລະນັບຈຳນວນຄົນທັງຫລາຍທີ່ນະມັສການຢູ່ທີ່ນັ້ນ
2 ແຕ່ບໍຣິເວນຂ້າງນອກພຣະວິຫານນັ້ນຈົ່ງເວັ້ນເສັຽ ຢ່າໄດ້ແທກ ເພາະວ່າບ່ອນນັ້ນໄດ້ຊົງມອບໃຫ້ຄົນຕ່າງຊາດ
ແລ້ວ ເຂົາຈະຢຽບຢໍ່ານະຄອນສັກສິດໃນລະຫວ່າງສີ່ສິບສອງເດືອນ
3 ເຮົາຈະອະນຸຍາດໃຫ້ພຍານທັງສອງຂອງເຮົາ ແລະເຂົາຈະນຸ່ງຫົ່ມຜ້າຫຍາບ ແລະປະກາດພຣະທັມໄປຕລອດ
ພັນສອງຮ້ອຍຫົກສິບວັນ"
4 ພຍານທັງສອງນັ້ນຄືຕົ້ນໝາກກອກເທດສອງຕົ້ນ ແລະເຄື່ອງຮອງຕີນໂຄມສອງອັນທີ່ຕັ້ງຢູ່ພຣະພັກພຣະຜູ້ເປັນ
ເຈົ້າຂອງແຜ່ນດິນໂລກ
5 ຖ້າຜູ້ໃດຢາກທຳຮ້າຍພຍານທັງສອງນັ້ນ ໄຟກໍຈະພຸ່ງອອກຈາກປາກຂອງເຂົາເຜົາຜານສັດຕຣູນັ້ນເສັຽ ແມ່ນ
ແລ້ວ, ຖ້າຜູ້ໃດຢາກທຳຮ້າຍເຂົາ ຜູ້ນັ້ນກໍຕ້ອງຕາຍຢ່າງນັ້ນ
6 ຝ່າຍພຍານທັງສອງນັ້ນມີສິດອຳນາດອັດທ້ອງຟ້າໄວ້ ເພື່ອບໍ່ໃຫ້ຝົນຕົກໃນລະຫວ່າງວັນເຫລົ່ານັ້ນ ທີ່ເຂົາກຳລັງ
ປະກາດພຣະທັມ ແລະມີສິດອຳນາດໃຫ້ນໍ້າກາຍເປັນເລືອດໄດ້ ທັງມີສິດອຳນາດບັນດານໃຫ້ພັຍອັນຕະຣາຍ
ທຸກຢ່າງທໍຣະມານແຜ່ນດິນໂລກໄດ້ທຸກເວລາຕາມຄວາມປາຖນາ
7 ເມື່ອການພຍານຂອງເຂົາສິ້ນສຸດແລ້ວ ສັດຮ້າຍທີ່ຂຶ້ນມາຈາກເຫວເລິກນັ້ນ ກໍຈະສູ້ຮົບກັບເຂົາຈະຊະນະເຂົາ
ແລະຈະຂ້າເຂົາເສັຽ
8 ແລະສົບຂອງເຂົາຈະຢູ່ທີ່ຖນົນໃນມະຫານະຄອນນັ້ນ ຊຶ່ງຕາມຄວາມປຽບທຽບເອີ້ນວ່າເມືອງໂຊໂດມແລະເອ
ຢິບ ອັນເປັນເມືອງທີ່ອົງພຣະຜູ້ເປັນເຈົ້າຂອງເຂົາຊົງຖືກຄຶງໄວ້ທີ່ໄມ້ກາງແຂນ
9 ຄົນຫລາຍຊາດ ຫລາຍຕະກູນ ຫລາຍພາສາ ແລະຫລາຍປະເທດ ຈະເປັນສົບຂອງເຂົາຕລອດສາມວັນເຄິ່ງ
ແລະຈະບໍ່ຍອມໃຫ້ເອົາສົບເຫລົ່ານັ້ນບັນຈຸໄວ້ໃນອຸບໂມງ
10 ແລະບັນດາຊາວໂລກຈະຊົມຊື່ນຍິນດີເພາະເຂົາ ຈະສນຸກມ່ວນຊື່ນ ຈະໃຫ້ຂອງຂວັນຊຶ່ງກັນແລະກັນ ເພາະຜູ້
ປະກາດພຣະທັມທັງສອງນີ້ໄດ້ທໍຣະມານຊາວໂລກທັງຫລາຍ

11 ເມື່ອສາມວັນເຄິ່ງຜ່ານພົ້ນໄປແລ້ວ ລົມຊີວິດຊຶ່ງມາຈາກພຣະເຈົ້າໄດ້ເຂົ້າໃນສົບຂອງເຂົາ ເຂົາກໍລຸກຢືນຂຶ້ນ
ແລະຄົນທັງຫລາຍທີ່ໄດ້ເຫັນເຂົາກໍມີຄວາມຢ້ານກົວຢ່າງໃຫຍ່ຫລວງ
12 ຄົນເຫລົ່ານັ້ນໄດ້ຍິນພຣະສຸຣະສຽງດັງມາຈາກສວັນ ຊົງກ່າວແກ່ເຂົາວ່າ, "ຈົ່ງຂຶ້ນມາທີ່ນີ້" ແລະພວກສັດຕຣູກໍ
ໄດ້ເຫັນເຂົາຂຶ້ນເມືອໃນເມກເຂົ້າສູ່ສວັນ
13 ໃນເວລາໂມງນັ້ນບັງເກີດແຜ່ນດິນໄຫວຢ່າງໃຫຍ່ ແລະນຶ່ງສ່ວນສິບຂອງນະຄອນນັ້ນກໍເພພັງລົງ ຈຳນວນຄົນ
ຕາຍເພາະແຜ່ນດິນໄຫວນັ້ນມີເຈັດພັນຄົນ ແລະຄົນທີ່ຍັງເຫລືອຢູ່ກໍເກີດມີຄວາມຢ້ານຢ່າງໃຫຍ່ຫລວງ ຈຶ່ງພາ
ກັນຖວາຍພຣະກຽດແດ່ພຣະເຈົ້າແຫ່ງສວັນ
14 ວິບັດຖ້ວນສອງກໍຜ່ານໄປແລ້ວ ເບິ່ງແມ, ວິບັດຖ້ວນສາມກໍຈະມາເຖິງໃນໄວໆນີ້ແຫລະ
15 ເມື່ອເທວະດາຕົນທີ່ເຈັດໄດ້ເປົ່າແກຂຶ້ນແລ້ວ ມີຫລາຍສຽງໃນສວັນກ່າວດັງຂຶ້ນວ່າ, "ຣາຊອານາຈັກແຫ່ງພິພົບ
ນີ້ ໄດ້ກາຍເປັນກຳມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິດຂອງພຣະອົງ
ພຣະອົງຈະຊົງສເວີຍຣາດຕລອດໄປເປັນນິດ"

The Seventh Trumpet

16 ສ່ວນອະວຸໂສຊາວສີ່ທ່ານນັ້ນ ຊຶ່ງນັ່ງຢູ່ທີ່ບັນລັງຂອງຕົນຕໍ່ພຣະພັກພຣະເຈົ້າ ກໍໝູບລົງນະມັສການພຣະເຈົ້າ
ກາບທູນວ່າ,
17 "ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ຊົງຣິດທານຸພາບສູງສຸດ ຜູ້ຊົງດຳຣົງຢູ່ໃນປັດຈຸບັນນີ້ ແລະໄດ້ຊົງດຳຣົງຢູ່ໃນຄາວ
ກ່ອນ ພວກຂ້າພຣະອົງໂມທະນາພຣະເດດພຣະຄຸນຂອງພຣະອົງ ເພາະພຣະອົງໄດ້ຊົງໃຊ້ຣິດທານຸພາບອັນ
ໃຫຍ່ຫລວງຂອງພຣະອົງ ຈຶ່ງໄດ້ຊົງຕັ້ງຕົ້ນສເວີຍຣາດແຜ່ນດິນໂລກ
18 ຝ່າຍນາໆຊາດກໍມີຄວາມເຄືອງແຄ້ນ ແຕ່ພຣະພິໂຣດຂອງພຣະອົງກໍມາເຖິງແລ້ວ ເຖິງເວລາທີ່ຈະຊົງປະທານ
ຮາງວັນ ແກ່ພວກຂ້ອຍໃຊ້ຂອງພຣະອົງ ຄືພວກຜູ້ປະກາດພຣະທັມແລະພວກໄພ່ພົນຂອງພຣະອົງ ແລະແກ່
ທຸກຄົນທີ່ຢຳເກງພຣະນາມຂອງພຣະອົງ ທັງຜູ້ນ້ອຍແລະຜູ້ໃຫຍ່ ແລະເຖິງເວລາແລ້ວທີ່ພຣະອົງຈະຊົງທຳລາຍ
ພວກຄົນທີ່ທຳລາຍແຜ່ນດິນໂລກ"
19 ແລ້ວພຣະວິຫານຂອງພຣະເຈົ້າໃນມະຫາສວັນກໍໄຂອອກ ໃນພຣະວິຫານນັ້ນກໍເຫັນມີຫີບພຣະສັນຍາຂອງ
ພຣະອົງ ແລ້ວກໍບັງເກີດມີຟ້າແມບ ສຽງຕ່າງໆກັບຟ້າຮ້ອງ ແຜ່ນດິນໄຫວ ທັງໝາກເຫັບຢ່າງຫລວງຫລາຍ

## 12 ຜູ້ຍິງແລະພຍານາກ

The Woman and the Dragon

1 ມີຫມາຍສຳຄັນອັນໃຫຍ່ປາກົດໃນສວັນ ຄືຜູ້ຍິງຄົນນຶ່ງມີດວງອາທິດຄຸມຕົວເໝືອນອາພອນ ມີດວງຈັນຢູ່ໃຕ້ຕີນ
ມີດາວສິບສອງດວງຢູ່ເທິງຫົວເໝືອນພວງມາລັຍ
2 ຍິງນັ້ນມີທ້ອງແລະຮ້ອງຄາງເຈັບປວດຢູ່ ກຳລັງຈະເກີດລູກ
3 ມີໝາຍສຳຄັນອີກຢ່າງນຶ່ງປາກົດໃນສວັນດັ່ງນີ້ ມີພຍານາກໃຫຍ່ສີແດງໂຕນຶ່ງ ມີເຈັດຫົວ ສິບເຂົາ ຢູ່ເທິງຫົວນັ້ນ
ມີມົງກຸດເຈັດອັນ
4 ຫາງພຍານາກໄດ້ຟາດດວງດາວໃນທ້ອງຟ້ານຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ ແລະພຍານາກໂຕນັ້ນຢືນຢູ່ຕໍ່
ຫນ້າຜູ້ທີ່ຈວນຈະເກີດລູກ ເພື່ອຈະກືນລູກນັ້ນເມື່ອເກີດແລ້ວ
5 ຜູ້ຍິງນັ້ນໄດ້ເກີດລູກຊາຍ ຜູ້ຊຶ່ງຈະປົກຄອງປະຊາຊາດທັງປວງດ້ວຍຄ້ອນເຫລັກ ແລະລູກນັ້ນໄດ້ຖືກຊົງຍົກຂຶ້ນ
ເມືອເຖິງພຣະເຈົ້າ ແລະເຖິງພຣະຣາຊບັນລັງຂອງພຣະອົງ
6 ຝ່າຍຍິງນັ້ນໄດ້ໜີເຂົ້າໄປອາສັຍຢູ່ໃນປ່າ ທີ່ນາງມີບ່ອນຢູ່ ຊຶ່ງພຣະເຈົ້າໄດ້ຊົງຈັດຕຽມໄວ້ໃຫ້ເພື່ອນາງຈະໄດ້ຮັບ
ການລ້ຽງດູຢູ່ທີ່ນັ້ນລະຫວ່າງພັນສອງຮ້ອຍຫົກສິບວັນ

Michael Defeats the Dragon

7 ຂນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສວັນ ມີຄາເອນກັບເທພບໍຣິວານຂອງຕົນໄດ້ສູ້ຮົບກັບພຍານາກ ພຍານາກ
ກັບບໍຣິວານຂອງມັນກໍຕໍ່ສູ້

8 ແຕ່ຝ່າຍພຍານາກບໍ່ອາດຊັຍຊະນະໄດ້ ແລະພວກພຍານາກຈຶ່ງບໍ່ມີບ່ອນຢູ່ໃນສວັນຕໍ່ໄປອີກ

9 ພຍານາກໃຫຍ່ຊຶ່ງເປັນງູແຕ່ເດີກດຳບັນທີ່ເຂົາເອີ້ນວ່າ ເດັຽໂບໂລ (Devil) ຫລື ຊາຕານ (Satan) ຜູ້ຫລອກ
ລວງມະນຸດທັງໂລກ ກໍຖືກຊັດຖິ້ມລົງເສັຽ ພຍານາກກັບບໍຣິວານຂອງມັນກໍຖືກຖິ້ມລົງເທິງແຜ່ນດິນໂລກ

10 ແລະຂ້າພະເຈົ້າໄດ້ຍິນສຽງດັງຂຶ້ນໃນສວັນວ່າ, “ບັດນີ້ຄວາມລອດພົ້ນ ຣິດເດດ ແລະຣາຊອານາຈັກແຫ່ງພຣະ
ເຈົ້າຂອງເຮົາທັງຫລາຍກັບທັງອຳນາດພຣະຄຣິດຂອງພຣະອົງໄດ້ມາເຖິງແລ້ວ ເພາະວ່າຜູ້ທີ່ກ່າວໂທດພວກພີ່
ນ້ອງຂອງເຮົາຕໍ່ພຣະພັກພຣະເຈົ້າຂອງເຮົາທັງກາງເວັນແລະກາງຄືນ ກໍໄດ້ຖືກຖິ້ມລົງເສັຽແລ້ວ

11 ເຂົາເຫລົ່ານັ້ນໄດ້ຊະນະພຍານາກດ້ວຍພຣະໂລຫິດຂອງພຣະເມສານ້ອຍ ແລະເພາະຄຳພຍານຂອງເຂົາເອງ
ເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່ເສັຽດາຍຊີວິດຂອງຕົນ

12 ເພາະເຫດນັ້ນແຫລະ, ສວັນກັບບັນດາຜູ້ທີ່ຢູ່ໃນສວັນ ຈົ່ງຊົມຊື່ນຍິນດີ ແຕ່ວິບັດຈະມີແກ່ແຜ່ນດິນໂລກແລະນ້ຳ
ທະເລ ເພາະວ່າມານໄດ້ລົງມາຫາເຈົ້າດ້ວຍຄວາມຄຽດແຄ້ນອັນໃຫຍ່ ເພາະມັນຮູ້ວ່າເວລາຂອງມັນມີນ້ອຍ”

The Dragon Fights Again on Earth

13 ເມື່ອພຍານາກນັ້ນເຫັນວ່າຕົນຖືກຖິ້ມລົງເທິງແຜ່ນດິນໂລກແລ້ວ ມັນກໍໄລ່ຕິດຕາມຍິງທີ່ເກີດລູກຜູ້ຊາຍນັ້ນ

14 ແຕ່ພຣະເຈົ້າໄດ້ຊົງປະທານປີກນົກອິນຊີໃຫຍ່ສອງປີກໃຫ້ແກ່ຍິງນັ້ນ ເພື່ອໃຫ້ນາງບິນໜີຈາກໜ້າງູນັ້ນເຂົ້າໄປ
ໃນປ່າ ເຖິງບ່ອນທີ່ນາງຈະໄດ້ຮັບການລ້ຽງດູໃນຊົ່ວເວລານຶ່ງ ສອງເວລາ ກັບເຄິ່ງເວລາ

15 ງູນັ້ນໄດ້ພົ່ນນ້ຳອອກຈາກປາກເໝືອນແມ່ນ້ຳໄຫລຕາມຍິງນັ້ນເພື່ອຈະໃຫ້ພັດຍິງນັ້ນໄປ

16 ແຕ່ແຜ່ນດິນໄດ້ຊ່ອຍຍິງນັ້ນໄວ້ ໂດຍໄດ້ອະຊ່ອງຮັບກືນເອົານ້ຳທີ່ພຍານາກໄດ້ພົ່ນອອກມານັ້ນ

17 ຝ່າຍພຍານາກກໍຄຽດແຄ້ນຍິງນັ້ນ ຈຶ່ງອອກໄປສູ້ຮົບກັບເຊື້ອສາຍຂອງຍິງນັ້ນທີ່ເຫລືອຢູ່ ຄືພວກທີ່ຖືຮັກສາຂໍ້ບັນ
ຍັດຂອງພຣະເຈົ້າ ແລະທີ່ຍຶດຖືຄຳພຍານຝ່າຍພຣະເຢຊູ

The First Beast

ມັນໄດ້ຢືນຢູ່ທີ່ຫາດຊາຍທະເລ

## 13 ສັດຮ້າຍສອງໂຕ

The Two Beasts

1 ແລະຂ້າພະເຈົ້າໄດ້ເຫັນສັດຮ້າຍໂຕນຶ່ງຂຶ້ນມາຈາກທະເລ ມີສິບເຂົາເຈັດຫົວທີ່ເຂົາທັງສິບມີມົງກຸດສິບອັນ ແລະ
ທີ່ຫົວທັງເຈັດນັ້ນມີຊື່ເປັນຄຳໝິ່ນປມາດ

2 ສັດຮ້າຍທີ່ຂ້າພະເຈົ້າໄດ້ເຫັນນັ້ນ ໂຕເໝືອນເສືອດາວ ຕີນເໝືອນຕີນໝີ ແລະປາກເໝືອນປາກສິງ ພຍານາກ
ໄດ້ໃຫ້ຣິດເດດແລະບັນລັງກັບອຳນາດອັນໃຫຍ່ຫລວງຂອງຕົນແກ່ສັດຮ້າຍນັ້ນ

3 ຫົວຂອງສັດຮ້າຍນັ້ນຫົວນຶ່ງປາກົດເໝືອນກັບວ່າຖືກຟັນເຖິງຕາຍແລ້ວ ແຕ່ບາດແຜອັນໜ້າຈະຕາຍນັ້ນໄດ້ຖືກ
ປົວໃຫ້ດີແລ້ວ ຄົນທັງໂລກໄດ້ຕິດຕາມສັດຮ້າຍນັ້ນໄປດ້ວຍຄວາມອັສຈັນໃຈ

4 ເຂົາບູຊາພຍານາກເພາະມັນໄດ້ໃຫ້ອຳນາດແກ່ສັດຮ້າຍນັ້ນ ແລະເຂົາໄດ້ບູຊາສັດຮ້າຍນັ້ນໂດຍກ່າວວ່າ, “ໃຜ
ຈະປຽບປານກັບສັດນີ້ໄດ້ ແລະໃຜຈະສາມາດສູ້ຮົບກັບສັດນີ້ໄດ້”

5 ພຣະເຈົ້າຊົງອະນຸຍາດໃຫ້ສັດນັ້ນມີປາກເວົ້າຄຳຈອງຫອງແລະໝິ່ນປມາດ ແລະຊົງຍອມໃຫ້ມັນມີອຳນາດເຮັດ
ຢ່າງນັ້ນຕລອດສີ່ສິບສອງເດືອນ

6 ມັນຕັ້ງຕົ້ນກ່າວຄຳໝິ່ນປມາດຕໍ່ພຣະເຈົ້າ ຕໍ່ພຣະນາມຂອງພຣະອົງ ຕໍ່ສະຖານທີ່ສະຖິດຂອງພຣະອົງ ແລະຕໍ່ຜູ້ທີ່ຢູ່ໃນສວັນ

7 ແລະໄດ້ຊົງຍອມໃຫ້ມັນສູ້ຮົບກັບບັນດາໄພ່ພົນຂອງພຣະເຈົ້າແລະຊະນະເຂົາ ຍັງຊົງປະທານໃຫ້ມັນມີອຳນາດເໜືອຊົນທຸກຕະກູນ ທຸກຊາດ ທຸກພາສາ ແລະທຸກປະເທດ

8 ບັນດາຄົນທັງປວງທີ່ຢູ່ໃນໂລກຈະບູຊາສັດຮ້າຍນັ້ນ ຄືທຸກຄົນທີ່ບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ ຕັ້ງແຕ່ຊົງສ້າງໂລກຄືທະບຽນຂອງພຣະເມສານ້ອຍທີ່ຊົງຖືກຂ້າເສັຽນັ້ນ

9 ຖ້າຜູ້ໃດມີຫູ ຈົ່ງຟັງເອົາເທີນ

10 “ຜູ້ໃດທີ່ກຳນົດໄວ້ໃຫ້ໄປເປັນຊະເລີຍ ຜູ້ນັ້ນກໍຈະຕ້ອງໄປເປັນຊະເລີຍ ຜູ້ໃດທີ່ກຳນົດໄວ້ໃຫ້ຕາຍດ້ວຍດາບ ຜູ້ນັ້ນກໍຈະຕ້ອງຖືກຂ້າດ້ວຍດາບ” ນີ້ແຫລະ, ຄືຄວາມອົດທົນແລະຄວາມເຊື່ອທີ່ພວກໄພ່ພົນຂອງພຣະເຈົ້າຈະຕ້ອງມີ

The Second Beast

11 ແລ້ວຂ້າພະເຈົ້າເຫັນສັດຮ້າຍໂຕນຶ່ງຂຶ້ນມາຈາກພື້ນດິນ ມີສອງເຂົາເໝືອນແກະນ້ອຍແລະກ່າວຄຳເໝືອນພຍານາກ

12 ມັນໃຊ້ອຳນາດສັດຮ້າຍໂຕເດີມນັ້ນຢ່າງຄົບຖ້ວນ ແລະຕໍ່ໜ້າມັນ ມັນເຮັດໃຫ້ໂລກແລະຄົນທີ່ຢູ່ໃນໂລກບູຊາສັດຮ້າຍໂຕເດີມນັ້ນ ຊຶ່ງບາດແຜອັນເປັນໜ້າຈະຕາຍນັ້ນໄດ້ຖືກປົວໃຫ້ດີແລ້ວ

13 ສັດຮ້າຍນີ້ສະແດງໝາຍສຳຄັນອັນໃຫຍ່ ຈົນເຮັດໃຫ້ໄຟຕົກຈາກຟ້າລົງສູ່ແຜ່ນດິນໂລກຕໍ່ຕາມະນຸດ

14 ມັນຫລອກລວງຄົນທັງຫລາຍທີ່ຢູ່ໃນໂລກດ້ວຍໝາຍສຳຄັນ ທີ່ຊົງຍອມໃຫ້ມັນເຮັດຕໍ່ໜ້າສັດຮ້າຍໂຕເດີມນັ້ນ ແລະມັນສັ່ງໃຫ້ເຂົາສ້າງຮູບສັດຮ້າຍທີ່ຖືກຟັນດ້ວຍດາບແຕ່ຍັງບໍ່ຕາຍນັ້ນ

15 ຊົງຍອມໃຫ້ມັນມີອຳນາດທີ່ຈະໃຫ້ລົມຫັນໃຈແກ່ຮູບສັດນັ້ນ ເພື່ອຮູບສັດນັ້ນຈະປາກໄດ້ ແລະໃຫ້ມີອຳນາດເຮັດໃຫ້ບັນດາຄົນທີ່ບໍ່ຍອມບູຊາຮູບສັດຮ້າຍນັ້ນເຖິງແກ່ຄວາມຕາຍ

16 ມັນຍັງເຮັດໃຫ້ຄົນທັງປວງທັງນ້ອຍແລະໃຫຍ່ ທັງຮັ່ງມີແລະຍາກຈົນ ທັງເສຣີແລະຂ້ອຍຂ້າ ໄດ້ຮັບເຄື່ອງໝາຍໄວ້ທີ່ມືຂວາຫລືທີ່ໜ້າຜາກຂອງເຂົາ

17 ເພື່ອບໍ່ໃຫ້ຜູ້ໃດຊື້ຫລືຂາຍໄດ້ ເວັ້ນໄວ້ແຕ່ຜູ້ທີ່ມີເຄື່ອງໝາຍນັ້ນ ຊຶ່ງເປັນຊື່ຂອງສັດຮ້າຍຫລືເລກທີ່ໝາຍເຖິງຊື່ມັນນັ້ນ

18 ໃນເຣື່ອງນີ້ຕ້ອງໃຊ້ສະຕິປັນຍາຄວາມຮູ້ ຖ້າຜູ້ໃດມີຄວາມເຂົ້າໃຈກໍໃຫ້ຄິດເລກຂອງສັດນັ້ນ ເພາະເປັນເລກຂອງບຸກຄົນຜູ້ນຶ່ງ ເລກຂອງມັນຄືຫົກຮ້ອຍຫົກສິບຫົກ

## 14 ເພງຂອງຄົນແສນສີ່ໝື່ນສີ່ພັນ

The Lamb and the 144,000

1 ຂ້າພະເຈົ້າໄດ້ເຫັນແລະດັ່ງນີ້ ພຣະເມສານ້ອຍຊົງຢືນຢູ່ທີ່ພູຊີໂອນ ແລະຜູ້ທີ່ຢູ່ກັບພຣະອົງມີຈຳນວນແສນສີ່ຫມື່ນສີ່ພັນຄົນ ຊຶ່ງເປັນຜູ້ທີ່ມີພຣະນາມຂອງພຣະອົງແລະພຣະນາມພຣະບິດາຂອງພຣະອົງຂຽນໄວ້ທີ່ໜ້າຜາກຂອງເຂົາ

2 ຂ້າພະເຈົ້າໄດ້ຍິນສຽງດັງຈາກສວັນເໝືອນສຽງນ້ຳອັນຫລວງຫລາຍ ແລະເໝືອນສຽງຟ້າຮ້ອງດັງສນັ່ນ ສຽງທີ່ຂ້າພະເຈົ້າໄດ້ຍິນນັ້ນກໍເໝືອນສຽງນັກດີດພິນກຳລັງດີດພິນຢູ່

3 ຄົນເຫລົ່ານັ້ນຮ້ອງເພງບົດໃຫມ່ຕໍ່ໜ້າພຣະຣາຊບັນລັງ ຕໍ່ໜ້າສັດທັງສີ່ ແລະຕໍ່ໜ້າພວກຜູ້ອະວຸໂສ ບໍ່ມີຜູ້ໃດສາມາດຮຽນຮູ້ເພງບົດນັ້ນໄດ້ ເວັ້ນແຕ່ຄົນແສນສີ່ຫມື່ນສີ່ພັນນັ້ນທີ່ໄດ້ຊົງໄຖ່ໄວ້ແລ້ວຈາກແຜ່ນດິນໂລກ

4 ຄົນເຫລົ່ານີ້ແຫລະ, ເປັນຜູ້ທີ່ບໍ່ມີຄວາມຊົ່ວມົວໝອງກັບຜູ້ຍິງ ເພາະເຂົາເປັນພວກພົມມະຈາຣີ ພຣະເມສາ
ນ້ອຍສະເດັດໄປທາງໃດແມ່ນຄົນເຫລົ່ານີ້ທີ່ຕາມສະເດັດ ຄົນເຫລົ່ານີ້ແຫລະ, ທີ່ຊົງໄຖ່ໄວ້ຈາກມວນມະນຸດ
ເພື່ອເປັນຜົນແຣກຖວາຍແດ່ພຣະເຈົ້າ ແລະແດ່ພຣະເມສານ້ອຍ
5 ຈະຫາຄວາມຕົວະໃນປາກຂອງເຂົາບໍ່ພົບ ເຂົາບໍ່ມີຈຸດດ່າງພ້ອຍແລ້ວ

The Messages of the Three Angels

6 ແລ້ວຂ້າພະເຈົ້າໄດ້ເຫັນເທວະດາອີກຕົນນຶ່ງບິນໄປໃນທ້ອງຟ້າ ມີຂ່າວປະເສີດອັນຕລອດໄປເປັນນິດເພື່ອນຳ
ໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ ທຸກຕະກູນ ທຸກພາສາ ແລະທຸກຊາດ
7 ເທວະດາຕົນນັ້ນໄດ້ຮ້ອງສຽງດັງຂຶ້ນວ່າ, “ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງ ເພາະເຖິງເວ
ລາທີ່ພຣະອົງຈະຊົງພິພາກສາແລ້ວ ແລະຈົ່ງນະມັສການພຣະອົງຜູ້ຊົງສ້າງຟ້າສວັນ ແຜ່ນດິນໂລກ ນ້ຳທະເລ
ກັບນ້ຳພຸທັງຫລາຍ”
8 ແລະເທວະດາອີກຕົນນຶ່ງເປັນຕົນທີສອງໄດ້ຕາມໄປຮ້ອງຂຶ້ນວ່າ, “ບາບີໂລນມະຫານະຄອນນັ້ນຫລົ້ມຈົມແລ້ວ
ຫລົ້ມຈົມເສັຽແລ້ວ ຄືນະຄອນທີ່ເຮັດໃຫ້ປະຊາຊາດທັງປວງດື່ມເຫລົ້າແວງປຸກຢ່າງເຫລືອເກີນຂອງຕົນ ຕາມ
ຄວາມປາຖນາທາງກາມ”
9 ມີເທວະດາອີກຕົນນຶ່ງເປັນຕົນທີສາມ ຕາມໄປຮ້ອງສຽງດັງຂຶ້ນວ່າ, “ຖ້າຜູ້ໃດບູຊາສັດຮ້າຍແລະຮູບຂອງມັນ
ແລະຮັບເຄື່ອງໝາຍນັ້ນໄວ້ທີ່ໜ້າຜາກຫລືທີ່ມື
10 ຜູ້ນັ້ນແຫລະ, ຈະຕ້ອງດື່ມເຫລົ້າແວງແຫ່ງພຣະພິໂຣດຂອງພຣະເຈົ້າ ທີ່ຊົງຖອກລົງໃນຈອກແຫ່ງພຣະພິໂຣດ
ນັ້ນໂດຍບໍ່ປົນກັບສິ່ງໃດ ຜູ້ນັ້ນຈະຕ້ອງຖືກທໍຣະມານໃນໄຟກັບມາດຕໍ່ໜ້າຝູງເທວະດາບໍຣິສຸດ ແລະຕໍ່ພຣະພັກ
ພຣະເມສານ້ອຍ
11 ຄວັນແຫ່ງການທໍຣະມານຂອງເຂົາກໍພຸ່ງຂຶ້ນຕລອດໄປເປັນນິດ ຄົນທັງຫລາຍທີ່ບູຊາສັດຮ້າຍແລະຮູບຂອງມັນ
ກັບຜູ້ທີ່ຮັບເຄື່ອງໝາຍຊື່ຂອງມັນນັ້ນ ຈະບໍ່ມີເວລາພັກຜ່ອນທັງກາງເວັນແລະກາງຄືນ
12 ໃນເຣື່ອງນີ້ພວກໄພ່ພົນຂອງພຣະເຈົ້າ ຄືຜູ້ທີ່ຖືຮັກສາຂໍ້ບັນຍັດຂອງພຣະເຈົ້າ ແລະຄວາມເຊື່ອຝ່າຍພຣະເຢຊູ ກໍ
ຕ້ອງໃຊ້ຄວາມພຽນອົດທົນ
13 ແລະຂ້າພະເຈົ້າໄດ້ຍິນພຣະສຸຣະສຽງຈາກສວັນຊົງສັ່ງວ່າ, “ຈົ່ງຂຽນໄວ້ວ່າ ຄົນທັງຫລາຍທີ່ຕາຍໃນອົງພຣະຜູ້
ເປັນເຈົ້າຕັ້ງແຕ່ນີ້ໄປກໍເປັນສຸກ” ແລະພຣະວິນຍານຊົງຢືນຢັນວ່າ, “ຈິງຢູ່ແລ້ວ ເພື່ອເຂົາຈະໄດ້ພັກຜ່ອນຈາກ
ການເມື່ອຍຍາກຂອງຕົນ ເພາະວ່າການງານທີ່ເຂົາໄດ້ເຮັດນັ້ນກໍຕິດຕາມເຂົາໄປ”

## ການກ່ຽວເກັບຜົນຂອງແຜ່ນດິນໂລກ

Reaping the Earth’s Harvest

14 ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້ ມີເມກຂາວ ແລະມີຜູ້ນຶ່ງປະທັບເທິງເມກນັ້ນເໝືອນກັບບຸດມະນຸດ ພຣະສຽນ
ສວມພວງມາລັຍຄຳ ແລະພຣະຫັດຊົງຖືກ່ຽວດວງຄົມ
15 ມີເທວະດາອີກຕົນນຶ່ງອອກມາຈາກພຣະວິຫານ ຮ້ອງສຽງດັງຂຶ້ນທູນພຣະອົງຜູ້ປະທັບເທິງເມກນັ້ນວ່າ, “ຈົ່ງໃຊ້
ກ່ຽວຂອງພຣະອົງກ່ຽວໄປເທີນ ເພາະເຖິງເວລາກ່ຽວແລ້ວ ດ້ວຍວ່າຜົນທີ່ຈະຕ້ອງເກັບກ່ຽວໃນແຜ່ນດິນໂລກກໍ
ສຸກແລ້ວ”
16 ພຣະອົງຜູ້ຊົງປະທັບເທິງເມກນັ້ນໄດ້ຊົງໃຊ້ກ່ຽວນັ້ນເທິງແຜ່ນດິນໂລກ ແຜ່ນດິນໂລກຈຶ່ງໄດ້ຖືກກ່ຽວແລ້ວ
17 ມີເທວະດາອີກຕົນນຶ່ງອອກມາຈາກພຣະວິຫານໃນສວັນ ຖືກ່ຽວດວງຄົມເໝືອນກັນ
18 ແລະມີເທວະດາອີກຕົນນຶ່ງຜູ້ມີອຳນາດເໜືອນໄຟ ໄດ້ອອກມາຈາກແທ່ນບູຊາຮ້ອງບອກຜູ້ຖືກ່ຽວ

ດວງຄົມດ້ວຍສຽງດັງວ່າ, “ຈົ່ງໃຊ້ກ່ຽວດວງຄົມຂອງທ່ານກ່ຽວພວງຜົນອະງຸ່ນແຫ່ງແຜ່ນດິນໂລກ ເພາະໝາກ
ອະງຸ່ນນັ້ນສຸກແລ້ວ”
19 ເທວະດາຕົນນັ້ນຈຶ່ງໃຊ້ກ່ຽວຂອງຕົນໄປເທິງແຜ່ນດິນໂລກ ເກັບກ່ຽວຜົນເຄືອອະງຸ່ນຂອງແຜ່ນດິນໂລກ ແລ້ວກໍ
ຖິ້ມລົງໃນອ່າງໃຫຍ່ຢຽບໝາກອະງຸ່ນແຫ່ງພຣະພິໂຣດຂອງພຣະເຈົ້າ
20 ອ່າງທີ່ເຂົາຢຽບນັ້ນຕັ້ງຢູ່ນອກເມືອງ ເລືອດຈຶ່ງໄຫລອອກຈາກອ່າງນັ້ນສູງເຖິງບັງຫຽນມ້າ ໄຫລນອງໄປປະມານ
ແສນຫົກໝື່ນວາ

## 15 ເທວະດາແລະພັຍອັນຕະຣາຍປະການສຸດທ້າຍ

The Angels with the Seven Last Plagues

1 ຂ້າພະເຈົ້າໄດ້ເຫັນໝາຍສຳຄັນອັນໃຫຍ່ຫລວງແລະໜ້າອັສຈັນໃນສວັນອີກປະການນຶ່ງ ຄືມີເທວະດາເຈັດຕົນຖື
ພັຍອັນຕະຣາຍເຈັດຢ່າງ ເປັນພັຍອັນຕະຣາຍຄັ້ງສຸດທ້າຍ ເພາະວ່າພຣະພິໂຣດຂອງພຣະເຈົ້າກໍຄົບຖ້ວນລົງ
ດ້ວຍພັຍອັນຕະຣາຍເຫລົ່ານີ້
2 ຂ້າພະເຈົ້າໄດ້ເຫັນເປັນເໝືອນທະເລແກ້ວປົນໄຟ ແລະໄດ້ເຫັນບັນດາຄົນທີ່ຊະນະສັດຮ້າຍແລະຮູບຂອງມັນ
ກັບເລກໝາຍຊື່ຂອງມັນ ຢືນຢູ່ແຄມທະເລແກ້ວນັ້ນ ເຂົາຖືພິນທີ່ພຣະເຈົ້າຊົງປະທານ
3 ເຂົາຮ້ອງເພງຂອງໂມເຊຂ້ອຍໃຊ້ຂອງພຣະເຈົ້າແລະເພງຂອງພຣະເມສານ້ອຍນັ້ນວ່າ, “ຂ້າແດ່ພຣະເຈົ້າຜູ້ຊົງ
ຣິດທານຸພາບອັນສູງສຸດ ພຣະຣາຊກິຈຂອງພຣະອົງກໍໃຫຍ່ຫລວງແລະໜ້າອັສຈັນ ຂ້າແດ່ອົງພຣະມະຫາກະ
ສັດແຫ່ງປະຊາຊາດທັງປວງ ວິຖີທາງຂອງພຣະອົງກໍຍຸດຕິທັມແລະທ່ຽງຈິງ
4 ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃຜໜໍຈະບໍ່ຢຳເກງພຣະອົງ ແລະຈະບໍ່ຖວາຍພຣະກຽດແດ່ພຣະນາມຂອງພຣະອົງ
ເພາະວ່າພຣະອົງຜູ້ດຽວຊົງເປັນຜູ້ບໍຣິສຸດ ປະຊາຊາດທັງປວງຈະມານະມັສການຕໍ່ພຣະພັກພຣະອົງ ເພາະກິຈ
ການອັນຍຸດຕິທັມຂອງພຣະອົງກໍປາກົດຕໍ່ພຣະພັກພຣະອົງກໍປາກົດແຈ້ງແລ້ວ”
5 ຫລັງຈາກນີ້ຂ້າພະເຈົ້າໄດ້ເຫັນພຣະວິຫານໃນສວັນ ຄືສຳນັກຜ້າແຫ່ງຄຳພຍານໄຂອອກ
6 ເທວະດາເຈັດຕົນທີ່ຖືພັຍອັນຕະຣາຍທັງເຈັດໄດ້ອອກມາຈາກພຣະວິຫານນັ້ນ ນຸ່ງຫົ່ມຜ້າປ່ານເນື້ອລະອຽດ
ເສາະໃສ ແລະມີສາຍຮັດຄຳຮັດທີ່ໜ້າເອິກ
7 ສັດໂຕນຶ່ງໃນສີ່ໂຕນັ້ນ ໄດ້ເອົາຂັນຄຳເຈັດໜ່ວຍທີ່ເຕັມດ້ວຍພຣະພິໂຣດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ສືບໆໄປ
ເປັນນິດ ຍື່ນໃຫ້ແກ່ເທວະດາທັງເຈັດຕົນນັ້ນ
8 ແລ້ວພຣະວິຫານກໍເຕັມໄປດ້ວຍຄວັນທີ່ມາຈາກພຣະຣັສມີຂອງພຣະເຈົ້າ ແລະຈາກຣິດທານຸພາບຂອງພຣະອົງ
ບໍ່ມີຜູ້ໃດສາມາດເຂົ້າໄປໃນພຣະວິຫານນັ້ນໄດ້ ຈົນກວ່າພັຍອັນຕະຣາຍທັງເຈັດຂອງເທວະດາເຈັດຕົນນັ້ນຈະ
ໄດ້ສິ້ນສຸດລົງ

## 16 ຂັນແຫ່ງພຣະພິໂຣດ

The Bowls of God’s Wrath

1 ແລ້ວຂ້າພະເຈົ້າໄດ້ຍິນສຽງດັງອອກມາຈາກພຣະວິຫານ ສັ່ງເທວະດາເຈັດຕົນນັ້ນວ່າ, “ຈົ່ງໄປເສັຽ ເອົາຂັນທັງ
ເຈັດໜ່ວຍ
2 ເທວະດາຕົນແຣກຈຶ່ງອອກໄປເອົາຂັນຂອງຕົນຖອກລົງເທິງແຜ່ນດິນໂລກ ແລະຄົນທັງຫລາຍທີ່ມີເຄື່ອງໝາຍ
ຂອງສັດຮ້າຍ ແລະບູຊາຮູບຂອງມັນ ຈຶ່ງເກີດເປັນຝີຮ້າຍແຮງແລະເຈັບປວດ
3 ເທວະດາຕົນທີສອງໄດ້ຖອກຂັນຂອງຕົນລົງໃສ່ທະເລ ແລ້ວນໍ້າທະເລກໍກາຍເປັນເລືອດເໝືອນເລືອດຂອງຄົນ
ຕາຍ ແລະບັນດາສິ່ງທີ່ມີຊີວິດຢູ່ນັ້ນກໍຕາຍໝົດ

4 ເທວະດາຕົນທີສາມໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳແລະນ້ຳພຸທັງຫລາຍ ນ້ຳເຫລົ່ານັ້ນກໍກາຍເປັນເລືອດ
5 ແລ້ວຂ້າພະເຈົ້າໄດ້ຍິນເທວະດາແຫ່ງນ້ຳນັ້ນຮ້ອງວ່າ, "ຂ້າແດ່ອົງພຣະຜູ້ບໍຣິສຸດ ຜູ້ຊົງດຳຣົງຢູ່ບັດນີ້ ແລະຜູ້ຊົງ
ດຳຣົງຢູ່ໃນຄາວກ່ອນ ພຣະອົງຊົງເປັນຜູ້ຍຸດຕິທັມ ເພາະພຣະອົງຊົງພິພາກສາເຫດການເຫລົ່ານີ້
6 ເພາະຄົນເຫລົ່ານັ້ນໄດ້ເຮັດໃຫ້ເລືອດໄພ່ພົນຂອງພຣະເຈົ້າ ແລະຂອງພວກຜູ້ປະກາດພຣະທັມໄຫລອອກ ແລະ
ພຣະອົງໄດ້ຊົງປະທານເລືອດໃຫ້ເຂົາດື່ມ ກໍສົມຄວນກັບການກະທຳຂອງເຂົາແລ້ວ"
7 ແລະຂ້າພະເຈົ້າໄດ້ຍິນແທ່ນບູຊາຮ້ອງວ່າ, "ຈິງຢູ່ແລ້ວ ອົງພຣະຜູ້ເປັນເຈົ້າຜູ້ຊົງມີຣິດທານຸພາບສູງສຸດ ການພິ
ພາກສາຂອງພຣະອົງກໍທ່ຽງຈິງແລະຍຸດຕິທັມ"
8 ເທວະດາຕົນທີສີ່ໄດ້ຖອກຂັນຂອງຕົນລົງໃສ່ດວງອາທິດ ດວງອາທິດຈຶ່ງໄດ້ຮັບພຣະຣາຊທານອຳນາດລວກມະ
ນຸດດ້ວຍໄຟ
9 ມະນຸດທັງຫລາຍຈຶ່ງຖືກລວກດ້ວຍຄວາມຮ້ອນຮຸນອັນແຮງກ້າ ແລະເຂົາໄດ້ປ້ອຍດ່າພຣະນາມຂອງພຣະເຈົ້າ
ຜູ້ຊົງມີອຳນາດເໜືອພັຍອັນຕະຣາຍເຫລົ່ານັ້ນ ແລະເຂົາບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່ຖວາຍພຣະກຽດແດ່ພຣະ
ອົງ
10 ເທວະດາຕົນທີຫ້າໄດ້ຖອກຂັນຂອງຕົນລົງໃສ່ບັນລັງຂອງສັດຮ້າຍ ແລະອານາຈັກຂອງມັນກໍມືດໄປ ຄົນເຫລົ່າ
ນັ້ນໄດ້ຂົບຄ້ຽວລີ້ນຂອງຕົນດ້ວຍຄວາມເຈັບປວດ
11 ເຂົາໄດ້ປ້ອຍດ່າພຣະເຈົ້າແຫ່ງສວັນ ເພາະຄວາມເຈັບປວດແລະເພາະຝີທີ່ເກີດຕາມຕົວ ແຕ່ເຂົາບໍ່ໄດ້ກັບໃຈ
ເສັຽໃໝ່ຈາກກິຈການຂອງຕົນ
12 ເທວະດາຕົນທີຫົກໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳໃຫຍ່ ຄືແມ່ນ້ຳເອີຟຣາດ ນ້ຳໃນແມ່ນ້ຳນັ້ນຈຶ່ງແຫ້ງໄປ
ເພື່ອຈັດແຈງທາງໄວ້ສຳລັບກະສັດທັງຫລາຍທີ່ມາຈາກທິດຕາເວັນອອກ
13 ແລ້ວຂ້າພະເຈົ້າໄດ້ເຫັນຜີຖ່ອຍຮ້າຍສາມໂຕເໝືອນກັບອອກມາຈາກປາກພຍານາກ ຈາກປາກສັດຮ້າຍ ແລະ
ຈາກປາກຜູ້ປະກາດພຣະທັມປອມ
14 ດ້ວຍວ່າຜີເຫລົ່ານັ້ນເປັນຜີຮ້າຍທີ່ເຮັດໝາຍສຳຄັນ ມັນອອກໄປຫາກະສັດທັງຫລາຍທົ່ວພິພົບ ເພື່ອໃຫ້ກະສັດ
ເຫລົ່ານັ້ນມາຮ່ວມກັນສຳລັບການສົງຄາມ ໃນວັນອັນໃຫຍ່ຫລວງຂອງພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ
15 ("ເບິ່ງແມ, ເຮົາຈະມາເໝືອນຂະໂມຍ ຄວາມສຸກຈະມີແກ່ຜູ້ທີ່ເຝົ້າລະວັງ ແລະແກ່ຜູ້ທີ່ຮັກສາເສື້ອຜ້າຂອງຕົນບໍ່
ໃຫ້ຕົວເປືອຍກາຍ ຢ້ານວ່າຄົນທັງຫລາຍຈະເຫັນຄວາມລະອາຍຂອງຕົນ")
16 ແລະຜີທັງສາມໂຕນັ້ນໄດ້ໃຫ້ກະສັດທັງຫລາຍມາຊຸມນຸມກັນໃນບ່ອນນຶ່ງ ຕາມພາສາເຮັບເຣີເອີ້ນວ່າ ອາມາ
ເຄໂດນ
17 ເທວະດາຕົນທີເຈັດໄດ້ຖອກຂັນຂອງຕົນລົງໃສ່ອາກາດ ແລະມີພຣະສຸຣະສຽງດັ່ງອອກມາຈາກພຣະຣາຊບັນລັງ
ໃນພຣະວິຫານນັ້ນວ່າ, "ສຳເຣັດແລ້ວ"
18 ແລະເກີດມີຟ້າແມບ ມີສຽງດັງຕ່າງໆ ມີຟ້າຮ້ອງ ແລະເກີດແຜ່ນດິນໄຫວອັນໃຫຍ່ ຊຶ່ງຕັ້ງແຕ່ມີມະນຸດເກີດມາ
ໃນໂລກ ບໍ່ເຄີຍມີແຜ່ນດິນໄຫວອັນໃຫຍ່ແລະຮ້າຍປານນີ້ຈັກເທື່ອ
19 ມະຫານະຄອນນັ້ນກໍແຍກອອກເປັນສາມສ່ວນ ແລະຫົວເມືອງທັງປວງຂອງນາໆປະເທດກໍຫລົ້ມຈົມ ພຣະເຈົ້າ
ບໍ່ໄດ້ຊົງລືມມະຫານະຄອນບາບີໂລນ ແຕ່ໄດ້ຊົງໃຫ້ນະຄອນນັ້ນດື່ມຈອກເຫລົ້າແວງແຫ່ງພຣະພິໂຣດຂອງ
ພຣະອົງ
20 ເກາະທຸກເກາະກໍເຄື່ອນໜີໄປແລະຈະຊອກຫາພູທັງຫລາຍກໍບໍ່ພົບ
21 ມີໝາກເຫັບໃຫຍ່ ກ້ອນລະຫ້າສິບກິໂລກຣາມ ຕົກລົງມາຈາກຟ້າຖືກຄົນທັງປວງ ເຂົາຈຶ່ງປ້ອຍດ່າພຣະເຈົ້າ
ເພາະພັຍອັນຕະຣາຍທີ່ເກີດຈາກໝາກເຫັບນັ້ນ ດ້ວຍວ່າພັຍອັນຕະຣາຍນັ້ນຮ້າຍແຮງເຫລືອເກີນ

## 17 ການພິພາກສາລົງໂທດຍິງໂສເພນີຄົນສຳຄັນ

The Great Whore and the Beast

1 ເທວະດາຕົນນຶ່ງໃນເຈັດຕົນທີ່ຖືຂັນທັງເຈັດໜ່ວຍນັ້ນ ໄດ້ມາຫາຂ້າພະເຈົ້າແລະເວົ້າວ່າ, “ເຊີນມານີ້ເທີນ ເຮົາ
ຈະໃຫ້ທ່ານເຫັນການຊົງພິພາກສາລົງໂທດຍິງໂສເພນີຄົນສຳຄັນ ທີ່ນັ່ງຢູ່ເທິງແມ່ນ້ຳອັນຫລວງຫລາຍ
2 ຄືຍິງນັ້ນທີ່ບັນດາກະສັດທົ່ວໂລກໄດ້ຫລິ້ນຜິດຊາຍຍິງກັບມັນ ແລະຊາວໂລກທັງຫລາຍໄດ້ມຶວເມົາດ້ວຍເຫລົ້າ
ແວງແຫ່ງການຜິດຊາຍຍິງຂອງມັນນັ້ນ”
3 ເທວະດາຕົນນັ້ນໄດ້ຍົກຂ້າພະເຈົ້າເຂົ້າໄປໃນປ່າໂດຍພຣະວິນຍານ ແລະຂ້າພະເຈົ້າໄດ້ເຫັນຜູ້ຍິງຄົນນຶ່ງ ນັ່ງຢູ່
ເທິງຫລັງສັດຮ້າຍສີແດງເຂັ້ມໂຕນຶ່ງ ຊຶ່ງມີຊື່ຫລາຍຊື່ເປັນຄຳໝິ່ນປມາດເຕັມໄປທັງໂຕມັນມີເຈັດຫົວແລະສິບ
ເຂົາ
4 ຍິງນັ້ນນຸ່ງເຄື່ອງສີມ່ວງອ່ອນແລະສີແດງເຂັ້ມ ປະດັບປະດາດ້ວຍເຄື່ອງຄຳ ດ້ວຍເພັດພອຍຕ່າງໆແລະໄຂ່ມຸກ ມື
ຂອງຍິງນັ້ນຖືຈອກຄຳທີ່ເຕັມດ້ວຍຂອງໜ້າກຽດໜ້າຊັງ ແລະຂອງຂີ້ດຽດແຫ່ງການຜິດຊາຍຍິງຂອງຕົນ
5 ທີ່ໜ້າຜາກມີຊື່ຂຽນໄວ້ເປັນຄວາມເລິກລັບວ່າ, “ບາບີໂລນມະຫານະຄອນ ແມ່ຂອງຍິງໂສເພນີທັງຫລາຍ ແລະ
ແມ່ຂອງສິ່ງທັງປວງທີ່ໜ້າກຽດໜ້າຊັງໃນແຜ່ນດິນໂລກ”
6 ແລະຂ້າພະເຈົ້າໄດ້ເຫັນວ່າຍິງນັ້ນເມົາດ້ວຍເລືອດໄພ່ພົນຂອງພຣະເຈົ້າແລະດ້ວຍເລືອດຂອງບັນດາຜູ້ທີ່ຍອມ
ສລະຊີວິດເພາະເປັນພຍານຝ່າຍພຣະເຢຊູເມື່ອຂ້າພະເຈົ້າເຫັນຍິງນັ້ນແລ້ວກໍອັສຈັນໃຈຫລາຍ
7 ເທວະດາຕົນນັ້ນຈຶ່ງຖາມຂ້າພະເຈົ້າວ່າ, “ເປັນຫຍັງທ່ານຈຶ່ງອັສຈັນ ເຮົາຈະບອກໃຫ້ທ່ານຮູ້ຄວາມໝາຍຂໍ້ເລິກ
ລັບຂອງຍິງນັ້ນ ແລະຂອງສັດຮ້າຍທີ່ມີເຈັດຫົວແລະສິບເຂົາ ຊຶ່ງເປັນພາຫະນະຂອງຍິງນັ້ນ
8 ສັດຮ້າຍທີ່ທ່ານໄດ້ເຫັນນັ້ນໄດ້ເປັນຢູ່ໃນຄາວກ່ອນ ແຕ່ບັດນີ້ບໍ່ໄດ້ເປັນຢູ່ ມັນຈວນຈະຂຶ້ນມາຈາກເຫວເລິກເພື່ອ
ໄປສູ່ຄວາມຈິບຫາຍ ບັນດາຊາວໂລກທີ່ບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດຕັ້ງແຕ່ເລີ້ມຕົ້ນຊົງສ້າງໂລກນັ້ນ ກໍຈະ
ປລາດໃຈເມື່ອເຂົາເຫັນສັດຮ້າຍທີ່ໄດ້ເປັນຢູ່ໃນຄາວກ່ອນ ແຕ່ບັດນີ້ບໍ່ໄດ້ເປັນຢູ່ ແລະຈວນຈະປາກົດມາອີກ
9 ໃນເຣື່ອງນີ້ແຫລະ, ຕ້ອງໃຊ້ຈິດໃຈທີ່ມີສະຕິປັນຍາ ຫົວທັງເຈັດນັ້ນໄດ້ແກ່ພູນ້ອຍເຈັດໜ່ວຍທີ່ຍິງນັ້ນນັ່ງຢູ່ ຄືໄດ້
ແກ່ກະສັດເຈັດອົງ
10 ຊຶ່ງຫ້າອົງໄດ້ຊົງລ່ວງໄປແລ້ວ ອົງນຶ່ງກຳລັງຊົງເປັນຢູ່ ແລະອີກອົງນຶ່ງຍັງບໍ່ໄດ້ສະເດັດມາ ເມື່ອສະເດັດມາແລ້ວ
ຈະຕ້ອງດຳຣົງຢູ່ຊົ່ວຂນະນຶ່ງ
11 ສັດຮ້າຍທີ່ໄດ້ເປັນຢູ່ໃນຄາວກ່ອນ ແຕ່ບັດນີ້ບໍ່ໄດ້ເປັນຢູ່ນັ້ນ ກໍເປັນອົງຖ້ວນແປດ ແຕ່ຍັງເປັນອົງນຶ່ງໃນເຈັດອົງ
ນັ້ນ ແລະຈະໄປສູ່ຄວາມຈິບຫາຍ
12 ເຂົາທັງສິບທີ່ທ່ານໄດ້ເຫັນນັ້ນ ໄດ້ແກ່ກະສັດສິບອົງທີ່ຍັງບໍ່ໄດ້ສເວີຍຣາຊສົມບັດ ແຕ່ຈະໄດ້ຮັບອຳນາດເໝືອນ
ກະສັດດ້ວຍກັນກັບສັດຮ້າຍນັ້ນນຶ່ງຊົ່ວໂມງ
13 ກະສັດເຫລົ່ານັ້ນມີນ້ຳພຣະທັຍຢ່າງດຽວກັນ ແລະຊົງມອບຣິດແລະອຳນາດຂອງຕົນໃຫ້ແກ່ສັດຮ້າຍນັ້ນ
14 ກະສັດທັງຫລາຍນັ້ນຈະສູ້ຮົບກັບພຣະເມສານ້ອຍ ແລະພຣະເມສານ້ອຍຈະມີຊັຍຊະນະ ເພາະວ່າ
ພຣະອົງເປັນຈອມເຈົ້ານາຍທັງຫລາຍແລະເປັນຈອມເຈົ້າກະສັດທັງຫລາຍ ຝ່າຍບັນດາຄົນທີ່ຢູ່ກັບພຣະອົງ
ເປັນຜູ້ທີ່ພຣະອົງໄດ້ຊົງເອີ້ນເອົາ ແລະຊົງເລືອກໄວ້ ກັບທັງເປັນຜູ້ສັດຊື່ ກໍຈະມີຊັຍດ້ວຍກັນກັບພຣະອົງ
15 ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, “ແມ່ນ້ຳທັງຫລາຍທີ່ທ່ານໄດ້ເຫັນຍິງໂສເພນີນັ່ງຢູ່ນັ້ນ ໄດ້ແກ່ຊົນຊາດ
ມວນຊົນ ປະຊາຊາດ ແລະພາສາຕ່າງໆ
16 ເຂົາທັງສິບກັບສັດຮ້າຍທີ່ທ່ານໄດ້ເຫັນນັ້ນຈະພາກັນກຽດຊັງຍິງໂສເພນີ ຈະເຮັດໃຫ້ມັນຂາດມິດສະຫາຍແລະ
ເປືອຍກາຍ ຈະກັດກິນຊີ້ນແລະຈະເອົາໄຟເຜົາມັນເສັຽ

17 ເພາະວ່າພຣະເຈົ້າໄດ້ຊົງດົນໃຈເຂົາໃຫ້ເຮັດຕາມພຣະປະສົງຂອງພຣະອົງ ໂດຍການຊົງເຮັດໃຫ້ເຂົາມີຄວາມ
ຄິດຢ່າງດຽວກັນ ຈຶ່ງໄດ້ມອບອານາຈັກຂອງຕົນໃຫ້ແກ່ສັດຮ້າຍນັ້ນ ຈົນເຖິງຈະສຳເຣັດຕາມພຣະທັມຂອງພຣະ
ເຈົ້າ
18 ສ່ວນຜູ້ຍິງທີ່ທ່ານໄດ້ເຫັນນັ້ນໄດ້ແກ່ມະຫານະຄອນ ທີ່ມີອຳນາດເໜືອກະສັດທັງຫລາຍທົ່ວແຜ່ນດິນໂລກ"

## 18 ນະຄອນບາບີໂລນ

The Fall of Babylon

1 ຫລັງຈາກນີ້ຂ້າພະເຈົ້າໄດ້ເຫັນເທວະດາອີກຕົນນຶ່ງກຳລັງລົງມາຈາກສວັນ ມີອຳນາດອັນໃຫຍ່ຫລວງ ແລະ
ແຜ່ນດິນໂລກໄດ້ສວ່າງຂຶ້ນດ້ວຍຣັສມີຂອງຕົນນັ້ນ
2 ເທວະດານັ້ນໄດ້ຮ້ອງປະກາດສຽງແຮງກ້າຂຶ້ນວ່າ, "ບາບີໂລນມະຫານະຄອນຫລົ້ມຈົມແລ້ວ ຫລົ້ມຈົມເສັຽແລ້ວ
ມັນກາຍເປັນບ່ອນອາສັຍຂອງຜີຮ້າຍ ເປັນບ່ອນລີ້ຊ່ອນຂອງຜີຖ່ອຍຮ້າຍທຸກຢ່າງ ແລະເປັນຄອນນົກບໍ່ສະອາດ
ແລະໜ້າກຽດທຸກຊະນິດ
3 ເພາະວ່າປະຊາຊາດທັງປວງໄດ້ດື່ມເຫລົ້າແວງປຸກຢ່າງເຫລືອເກີນແຫ່ງການຜິດຊາຍຍິງຂອງນະຄອນນັ້ນ ບັນ
ດາກະສັດແຫ່ງແຜ່ນດິນໂລກໄດ້ລ່ວງຜິດຊາຍຍິງກັບນະຄອນນັ້ນ ແລະພໍ່ຄ້າທັງຫລາຍແຫ່ງແຜ່ນດິນໂລກໄດ້
ລ້ຳລວຍດ້ວຍຊັບອັນຟຸ່ມເຟືອຍຂອງນະຄອນນັ້ນ"
4 ແລ້ວຂ້າພະເຈົ້າໄດ້ຍິນພຣະສຸຣະສຽງອີກ ປະກາດອອກມາຈາກສວັນວ່າ, "ໄພ່ພົນຂອງເຮົາເອີຍ, ຈົ່ງອອກມາ
ຈາກນະຄອນນັ້ນເສັຽ ເພື່ອເຈົ້າທັງຫລາຍຈະບໍ່ໄດ້ເຂົ້າສ່ວນໃນການຜິດບາບຂອງມັນ ເພື່ອເຈົ້າຈະບໍ່ຖືກພັຍອັນ
ຕະຣາຍທີ່ຈະເກີດແກ່ມັນນັ້ນ
5 ເພາະວ່າບາບຂອງນະຄອນນັ້ນກອງສູງຂຶ້ນພຽງຟ້າແລ້ວ ແລະພຣະເຈົ້າໄດ້ຊົງຈົດຈຳການທຸຈະຣິດຂອງມັນໄວ້
6 ນະຄອນນັ້ນໄດ້ໃຫ້ຜົນຢ່າງໃດກໍຈົ່ງໃຫ້ຜົນແກ່ມັນຢ່າງນັ້ນ ແລະຈົ່ງຕອບແທນແກ່ການກະທຳຂອງມັນເປັນສອງ
ທໍ່ ໃນຈອກທີ່ມັນໄດ້ປະສົມໄວ້ກໍຈົ່ງປະສົມລົງໃນຈອກນັ້ນສອງທໍ່
7 ນະຄອນນັ້ນໄດ້ອວດຈອງຫອງແລະປ່ອຍຕົວໄປ ຕາມຄວາມສນຸກສນານເທົ່າໃດກໍຈົ່ງໃຫ້ມັນໄດ້ຮັບການທໍຣະ
ມານແລະຄວາມໂສກເສົ້າຫລາຍເທົ່ານັ້ນ ເພາະມັນຄິດໃນໃຈວ່າ "ເຮົາຢູ່ໃນຕຳແໜ່ງຣາຊີນີ ບໍ່ແມ່ນແມ່ໝ້າຍ
ເຮົາຈະບໍ່ປະສົບຄວາມໂສກເສົ້າຈັກເທື່ອ"
8 ເຫດສັນນັ້ນພັຍອັນຕະຣາຍຕ່າງໆຂອງນະຄອນນັ້ນຈະເກີດຂຶ້ນໃນວັນດຽວກັນ ຄືຄວາມຕາຍ ຄວາມໂສກເສົ້າ
ຄວາມອຶດຢາກ ແລະໄຟຈະເຜົາມັນໃຫ້ຈິບຫາຍເສັຽ ເພາະວ່າອົງພຣະຜູ້ເປັນເຈົ້າ ຄືພຣະເຈົ້າຜູ້ຊົງພິພາກສາ
ນະຄອນນັ້ນຊົງປະກອບດ້ວຍພຣະກຳລັງ
9 ບັນດາກະສັດແຫ່ງແຜ່ນດິນໂລກທີ່ໄດ້ລ່ວງຜິດຊາຍຍິງກັບນະຄອນນັ້ນ ແລະໄດ້ປ່ອຍຕົວໄປຕາມຄວາມສນຸກ
ສນານຮ່ວມກັນນັ້ນ ເມື່ອໄດ້ເຫັນຄວັນໄຟທີ່ໄໝ້ມັນກໍຈະຕີເອິກຮ້ອງໄຫ້
10 ກະສັດເຫລົ່ານັ້ນຈະຢືນຢູ່ຫ່າງໄກ ເພາະຢ້ານພັຍແຫ່ງການທີ່ທໍຣະມານຂອງນະຄອນນັ້ນ ແລະຈະກ່າວວ່າ, "ວິ
ບັດ ວິບັດແລ້ວ ບາບີໂລນ ມະຫານະຄອນທີ່ແຂງແຮງເອີຍ, ເຈົ້າໄດ້ຖືກການພິພາກສາລົງໂທດເສັຽ ພາຍໃນ
ຊົ່ວໂມງດຽວເທົ່ານັ້ນ"
11 ບັນດາພໍ່ຄ້າແຫ່ງແຜ່ນດິນໂລກຈະຮ້ອງໄຫ້ແລະໂສກເສົ້າເພາະນະຄອນນັ້ນ ດ້ວຍວ່າບໍ່ມີໃຜຈະຊື້ສິນຄ້າທີ່ເຂົາ
ບັນທຸກມານັ້ນ
12 ສິນຄ້າເຫລົ່ານັ້ນຄືຄຳ ເງິນ ເພັດພອຍຕ່າງໆ ໄຂ່ມຸກ ຜ້າປ່ານເນື້ອລະອຽດ ຜ້າສີມ່ວງອ່ອນ ຜ້າໄໝ ຜ້າສີແດງ
ເຂັ້ມ ໄມ້ຫອມທຸກຊະນິດ ເຄື່ອງໃຊ້ທຸກຊະນິດທີ່ເຮັດດ້ວຍງາ ດ້ວຍໄມ້ອັນມີຄ່າ ດ້ວຍທອງເຫລືອງ ດ້ວຍເຫລັກ
ແລະດ້ວຍຫີນລາຍ

13 ແຄ ເຄື່ອງຫອມ ກຳຍານ ນ້ຳມັນຫອມ ເຄື່ອງຫອມເຜົາບູຊາ ເຫລົ້າແວງ ນ້ຳມັນ ເຂົ້າແປ້ງລະອຽດ ເຂົ້າບເລ ງົວ
ແກະ ມ້າ ຣົດ ຂ້ອຍຂ້າ ແລະຊີວິດຈິດໃຈມະນຸດ
14 "ຜົນຊຶ່ງຈິດໃຈຂອງເຈົ້າປາຖນາຢາກໄດ້ນັ້ນ ກໍລ່ວງພົ້ນໄປຈາກເຈົ້າແລ້ວ ສິ່ງສາຣະພັດອັນປານີດວິເສດແລະ
ງົດງາມເຫລື້ອມໃສ ກໍສູນເສັຽໄປຈາກເຈົ້າແລ້ວ ເຈົ້າຈະບໍ່ໄດ້ພົບສິ່ງເຫລົ່ານີ້ອີກຈັກເທື່ອ"
15 ບັນດາພໍ່ຄ້າທີ່ຂາຍສິ່ງຂອງເຫລົ່ານີ້ ຈົນເປັນຄົນຮັ່ງມີເພາະນະຄອນນັ້ນ ຈະຢືນຢູ່ຫ່າງໄກ ເພາະຢ້ານພັຍແຫ່ງ
ການທໍຣະມານຂອງມັນ ເຂົາຈະຮ້ອງໄຫ້ແລະໂສກເສົ້າດ້ວຍສຽງດັງ
16 ວ່າ, "ວິບັດ ວິບັດແລ້ວ ມະຫານະຄອນນັ້ນ ທີ່ເຄີຍນຸ່ງຫົ່ມຜ້າປ່ານເນື້ອລະອຽດ ຜ້າສີມ່ວງອ່ອນ ຜ້າສີແດງເຂັ້ມ
ທີ່ເຄີຍປະດັບຕົວດ້ວຍຄຳ ດ້ວຍເພັດພອຍຕ່າງໆແລະໄຂ່ມຸກນັ້ນ
17 ພຽງແຕ່ໃນຊົ່ວໂມງດຽວ ຊັບສົມບັດເຫລົ່ານັ້ນໄດ້ຖືກຊົງທຳລາຍເສັຽໄປໝົດ" ນາຍສະເພົາທຸກຄົນ ແລະຄົນ
ໂດຍສານ ບັນດາລູກເຮືອແລະຄົນທັງປວງທີ່ມີອາຊີບທາງທະເລກໍຢືນຫ່າງໄກ
18 ເມື່ອຄົນເຫລົ່ານັ້ນໄດ້ເຫັນຄວັນໄຟທີ່ໄໝ້ນະຄອນນັ້ນກໍຮ້ອງວ່າ, "ນະຄອນໃດໜໍ ຈະເປັນເໝືອນມະຫານະ
ຄອນນີ້"
19 ເຂົາໄດ້ເອົາຂີ້ຝຸ່ນດິນໃສ່ຫົວຂອງຕົນ ພ້ອມຮ້ອງໄຫ້ແລະໂສກເສົ້າເອີຍຂຶ້ນວ່າ, "ວິບັດ ວິບັດແລ້ວ ມະຫານະ
ຄອນນີ້ ຊຶ່ງໄດ້ເຮັດໃຫ້ຄົນທັງປວງທີ່ມີສະເພົາເດີນທະເລ ເປັນຄົນຮັ່ງມີດ້ວຍຊັບສົມບັດຂອງມັນ ພາຍໃນຊົ່ວ
ໂມງດຽວກໍຖືກຊົງທຳລາຍເສັຽໄປໝົດ"
20 "ໂອ ຟ້າສວັນແລະບັນດາໄພ່ພົນຂອງພຣະເຈົ້າ ໂອ ອັຄສາວົກແລະຜູ້ປະກາດພຣະທັມທັງຫລາຍເອີຍ, ຈົ່ງຊົມ
ຊື່ນຍິນດີເພາະນະຄອນນັ້ນ ດ້ວຍວ່າພຣະເຈົ້າໄດ້ຊົງພິພາກສາລົງໂທດນະຄອນນັ້ນ ເພື່ອເປັນການແກ້ແຄ້ນໃຫ້
ທ່ານທັງຫລາຍແລ້ວ"
21 ແລ້ວມີເທວະດາຜູ້ມີຣິດຕົນນຶ່ງ ໄດ້ຍົກຫີນກ້ອນນຶ່ງເໝືອນຫີນໂມ້ໃຫຍ່ ຖິ້ມລົງໃນທະເລກ່າວວ່າ, "ບາບີໂລນ
ມະຫານະຄອນນັ້ນຈະຖືກຖິ້ມລົງໂດຍຮຸນແຮງຢ່າງນີ້ແຫລະ ແລ້ວຈະບໍ່ມີໃຜເຫັນມັນຕໍ່ໄປອີກຈັກເທື່ອ
22 ສຽງນັກດີດພິນ ນັກເສບ ນັກເປົ່າຂຸ່ຍ ແລະເປົ່າແກ ຈະບໍ່ໄດ້ຍິນໃນເຈົ້າຕໍ່ໄປອີກ ຈະບໍ່ພົບຄົນທີ່ມີວິຊາຊ່າງຢ່າງ
ໃດຈັກຄົນໃນເຈົ້າຕໍ່ໄປອີກ ແລະສຽງໂມ້ແປ້ງຈະບໍ່ໄດ້ຍິນໃນເຈົ້າຕໍ່ໄປອີກຈັກເທື່ອ
23 ຈະບໍ່ມີແສງໂຄມສ່ອງສວ່າງໃນເຈົ້າຕໍ່ໄປອີກ ຈະບໍ່ມີໃຜໄດ້ຍິນສຽງເຈົ້າບ່າວເຈົ້າສາວໃນເຈົ້າຕໍ່ໄປຈັກເທື່ອ
ເພາະວ່າບັນດາພໍ່ຄ້າຂອງເຈົ້າໄດ້ເປັນເຈົ້ານາຍແຫ່ງແຜ່ນດິນໂລກ ແລະບັນດາປະຊາຊາດໄດ້ຖືກຫລອກລວງ
ດ້ວຍເວດມົນຄາຖາຂອງເຈົ້າ
24 ໃນນະຄອນນັ້ນເຂົາໄດ້ພົບເລືອດຂອງຜູ້ປະກາດພຣະທັມ ແລະຂອງພວກໄພ່ພົນຂອງພຣະເຈົ້າ ກັບເລືອດຂອງ
ບັນດາຄົນທີ່ຖືກຂ້າເທິງແຜ່ນດິນໂລກນັ້ນ"

## 19

The Rejoicing in Heaven

1 ຫລັງຈາກນັ້ນຂ້າພະເຈົ້າໄດ້ຍິນເໝືອນສຽງດັງຂອງຝູງຄົນຈຳນວນຫລາຍໃນສວັນ ກຳລັງຮ້ອງວ່າ, "ອາເລລູຢາ
ຄວາມພົ້ນ ສະງ່າຣາສີ ແລະຣິດເດດ ກໍເປັນຂອງພຣະເຈົ້າຂອງເຮົາທັງຫລາຍ
2 ເພາະວ່າການພິພາກສາຂອງພຣະອົງທ່ຽງຈິງແລະຍຸດຕິທັມ ພຣະອົງໄດ້ຊົງພິພາກສາລົງໂທດຍິງໂສເພນີຄົນ
ສຳຄັນນັ້ນ ທີ່ໄດ້ເຮັດໃຫ້ແຜ່ນດິນໂລກຊົ່ວຮ້າຍໄປດ້ວຍການລ່ວງຜິດຊາຍຍິງຂອງຕົນ ເພື່ອເປັນການແກ້ແຄ້ນ
ຍິງນັ້ນຍ້ອນເລືອດບັນດາຂ້ອຍໃຊ້ຂອງພຣະອົງ"
3 ຄົນເຫລົ່ານັ້ນຮ້ອງຂຶ້ນເປັນເທື່ອທີສອງວ່າ, "ອາເລລູຢາ ຄວັນໄຟທີ່ໄໝ້ນະຄອນນັ້ນກໍພຸ່ງຂຶ້ນຕລອດໄປເປັນ
ນິດ"

4 ແລະພວກຜູ້ອະວຸໂສທັງຊາວສີ່ທ່ານກັບສັດທັງສີ່ນັ້ນ ກໍໄດ້ຂາບລົງນະມັສການພຣະເຈົ້າ ຜູ້ຊົງປະທັບເທິງພຣະ
ຣາຊບັນລັງນັ້ນ ແລະຮ້ອງຂຶ້ນວ່າ, "ອາແມນ ອາເລລູຢາ"
5 ແລະມີສຽງດັງອອກມາຈາກພຣະຣາຊບັນລັງວ່າ, "ເຈົ້າທັງຫລາຍ ຜູ້ເປັນຂ້ອຍຂ້າຂອງພຣະອົງ ທີ່ຢຳເກງພຣະ
ອົງ ທັງຜູ້ໃຫຍ່ແລະຜູ້ນ້ອຍ ຈົ່ງຖວາຍສັຣເສີນແດ່ພຣະເຈົ້າຂອງເຮົາທັງຫລາຍ"

## ງານລ້ຽງມຸງຄຸນສົມຣົດຂອງພຣະເມສານ້ອຍ

6 ແລ້ວຂ້າພະເຈົ້າໄດ້ຍິນເໝືອນສຽງຄົນຈຳນວນຫລວງຫລາຍ ເໝືອນສຽງນ້ຳຫລາຍ ແລະເໝືອນສຽງຟ້າຮ້ອງ
ສຽງແຮງກ້າວ່າ, "ອາເລລູຢາ ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາ ຜູ້ຊົງຣິດທານຸພາບອັນສູງ
ສຸດ ໄດ້ຊົງຂຶ້ນສເວີຍຣາຊແລ້ວ
7 ໃຫ້ເຮົາທັງຫລາຍຊົມຊື່ນຍິນດີແລະປິຕິຍິນດີ ພາກັນຖວາຍພຣະກຽດແດ່ພຣະອົງ ເພາະເຖິງເວລາມຸງຄຸນສົມ
ຣົດຂອງພຣະເມສານ້ອຍແລ້ວ ແລະເຈົ້າສາວຂອງພຣະອົງໄດ້ຕຽມພ້ອມແລ້ວ
8 ແລະຊົງໂຜດໃຫ້ເຈົ້າສາວນັ້ນ ນຸ່ງຫົ່ມຜ້າປ່ານເນື້ອລະອຽດເສາະໃສແລະບໍຣິສຸດ" (ເພາະຜ້າປ່ານເນື້ອດີນັ້ນ ໄດ້
ແກ່ການປະຕິບັດອັນຊອບທັມແຫ່ງພວກໄພ່ພົນຂອງພຣະເຈົ້າ)
9 ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, "ຈົ່ງຂຽນໄວ້ວ່າ ຄວາມສຸກມີແກ່ຄົນທັງຫລາຍທີ່ໄດ້ຮັບເຊີນມາໃນງານ
ລ້ຽງມຸງຄຸນສົມຣົດຂອງພຣະເມສານ້ອຍນັ້ນ" ແລະທ່ານໄດ້ບອກຂ້າພະເຈົ້າວ່າ, "ຖ້ອຍຄຳເຫລົ່ານີ້ເປັນພຣະ
ທັມທ່ຽງແທ້ຂອງພຣະເຈົ້າ"
10 ແລ້ວຂ້າພະເຈົ້າໄດ້ກົ້ມຕົວລົງແທບຕີນເທວະດານັ້ນເພື່ອຈະຂາບໄຫວ້ທ່ານ ແຕ່ທ່ານໄດ້ກ່າວກັບຂ້າພະເຈົ້າ
ວ່າ, "ລະວັງ ຢ່າເຮັດຢ່າງນັ້ນ ເຮົາເປັນເພື່ອນຂ້ອຍໃຊ້ຮ່ວມກັນກັບທ່ານ ແລະຮ່ວມກັບພີ່ນ້ອງຂອງທ່ານທີ່ຍຶດຖື
ຄຳພຍານຝ່າຍພຣະເຢຊູ ຈົ່ງນະມັສການພຣະເຈົ້າ" ເພາະວ່າເນື້ອຄວາມຂອງການປະກາດພຣະທັມກໍເປັນຄຳ
ພຍານຝ່າຍພຣະເຢຊູ

The Rider on the White Horse

11 ແລ້ວຂ້າພະເຈົ້າໄດ້ເຫັນສວັນໄຂອອກ ແລະດັ່ງນີ້ ມີມ້າຂາວໂຕນຶ່ງ ພຣະອົງຜູ້ປະທັບເທິງຫລັງມ້ານັ້ນຊົງພຣະ
ນາມວ່າ "ສັດຊື່" ແລະ "ທ່ຽງແທ້" ພຣະອົງຊົງພິພາກສາແລະທຳເສິກດ້ວຍຄວາມຍຸດຕິທັມ
12 ພຣະເນດຂອງພຣະອົງເໝືອນແປວໄຟ ເທິງພຣະສຽນຂອງພຣະອົງມີມົງກຸດຫລາຍອັນ ພຣະອົງຊົງມີພຣະນາມ
ຈາຣຶກໄວ້ ຊຶ່ງບໍ່ມີຜູ້ໃດຮູ້ຈັກເວັ້ນໄວ້ແຕ່ພຣະອົງເອງ
13 ເສື້ອຄຸມທີ່ພຣະອົງຊົງພີນັ້ນກໍຈຸ່ມແລ້ວໃນເລືອດ ແລະພຣະນາມຂອງພຣະອົງເອີ້ນວ່າ "ພຣະທັມຂອງພຣະເຈົ້າ"
14 ຝູງກອງທັບໃນສວັນນຸ່ງຫົ່ມຜ້າປ່ານເນື້ອລະອຽດຂາວບໍຣິສຸດ ຂີ່ມ້າຂາວແຫ່ຕາມສະເດັດໄປ
15 ມີພຣະແສງດາບຄົມອອກມາຈາກພຣະໂອດຂອງພຣະອົງ ເພື່ອພຣະອົງຈະຊົງຟັນບັນດາປະຊາຊາດດ້ວຍພຣະ
ແສງນັ້ນ ພຣະອົງນີ້ແຫລະ, ຈະຊົງຄຸ້ມຄອງເຂົາດ້ວຍຄ້ອນເຫລັກ ພຣະອົງຈະຊົງຢຽບຊຸມຢຽບໝາກອະງຸ່ນແຫ່ງ
ພຣະພິໂຣດອັນແຮງກ້າຂອງພຣະເຈົ້າ ຜູ້ຊົງຣິດທານຸພາບສູງສຸດ
16 ພຣະອົງຊົງມີພຣະນາມຈາຣຶກໄວ້ທີ່ເຄື່ອງທົງ ແລະທີ່ພຣະອຸຣະຂອງພຣະອົງວ່າ, "ຈອມເຈົ້າກະສັດ" ແລະ
"ຈອມເຈົ້ານາຍ"

The Beast and Its Armies Defeated

17 ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນນຶ່ງຢືນຢູ່ໃນດວງອາທິດ ທ່ານປະກາດດ້ວຍສຽງດັງແກ່ນົກທັງປວງທີ່ບິນ
ໄປມາໃນທ້ອງຟ້າວ່າ, "ຈົ່ງມາໂຮມກັນສຳລັບການກິນລ້ຽງອັນໃຫຍ່ຂອງພຣະເຈົ້າ
18 ເພື່ອຈະໄດ້ກິນຊີ້ນກະສັດ ຊີ້ນນາຍທະຫານ ຊີ້ນຊາຍສະກັນ ຊີ້ນມ້າແລະຊີ້ນຄົນຂີ່ມ້ານັ້ນ ແລະຊີ້ນປະຊາຊົນ
ທັງເສຣີແລະຂ້ອຍຂ້າ ທັງຜູ້ນ້ອຍແລະຜູ້ໃຫຍ່"

19 ແລະຂ້າພະເຈົ້າໄດ້ເຫັນສັດຮ້າຍແລະກະສັດທັງຫລາຍຂອງແຜ່ນດິນໂລກ ພ້ອມທັງກອງທັບຂອງກະສັດເຫລົ່າ
ນັ້ນມາໂຮມກັນ ເພື່ອຮົບເສິກຕໍ່ສູ້ພຣະອົງຜູ້ປະທັບເທິງຫລັງມ້ານັ້ນ ແລະຕໍ່ສູ້ກອງທັບຂອງພຣະອົງ
20 ສັດຮ້າຍນັ້ນໄດ້ຖືກຈັບພ້ອມດ້ວຍຄົນທີ່ປອມຕົວເປັນຜູ້ປະກາດພຣະທັມ ທີ່ໄດ້ເຮັດໝາຍສຳຄັນຕໍ່ໜ້າສັດຮ້າຍ
ນັ້ນ ແລະໃຊ້ໝາຍສຳຄັນນັ້ນຫລອກລວງຄົນທັງຫລາຍທີ່ຮັບເຄື່ອງໝາຍຂອງສັດຮ້າຍແລະບູຊາຮູບຂອງມັນ
ເຂົາທັງສອງໄດ້ຖືກຖິ້ມລົງທັງເປັນໃນບຶງໄຟທີ່ໄໝ້ຢູ່ດ້ວຍມາດ
21 ສ່ວນຄົນທີ່ຍັງເຫລືອຢູ່ນັ້ນ ໄດ້ຖືກຂ້າດ້ວຍພຣະແສງທີ່ອອກມາຈາກພຣະໂອດຂອງພຣະອົງ ຜູ້ຊົງປະທັບເທິງ
ຫລັງມ້ານັ້ນ ແລະນົກທັງປວງກໍກິນຊີ້ນຂອງຄົນເຫລົ່ານັ້ນຈົນອີ່ມ

## 20 ລະຫວ່າງພັນປີ

The Thousand Years

1 ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນນຶ່ງລົງມາຈາກສວັນ ທ່ານຖືຂໍກະແຈຂອງເຫວເລິກ ແລະຖືໂສ້ເສັ້ນໃຫຍ່
2 ທ່ານໄດ້ຈັບພຍານາກຊຶ່ງເປັນງູແຕ່ດຶກດຳບັນ ຄືພຍານາກແລະຊາຕານ ແລະໄດ້ຜູກມັດມັນໄວ້ລະຫວ່າງພັນປີ
3 ແລ້ວຖິ້ມມັນລົງໃນເຫວເລິກ ແລະລັ່ນກະແຈທັງຕີຕາປະທັບໃສ່ ເພື່ອບໍ່ໃຫ້ມັນຫລອກລວງບັນດາປະຊາຊາດ
ອີກຕໍ່ໄປ ຈົນກວ່າພັນປີນັ້ນລ່ວງໄປແລ້ວ ພາຍຫລັງນັ້ນຈຳເປັນຕ້ອງປ່ອຍມັນອອກໄປຊົ່ວຄາວ
4 ແລ້ວຂ້າພະເຈົ້າໄດ້ເຫັນບັນລັງຫລາຍອັນ ແລະຜູ້ທີ່ນັ່ງເທິງບັນລັງນັ້ນເປັນຜູ້ທີ່ໄດ້ຮັບພຣະຣາຊທານອຳນາດພິ
ພາກສາ ແລະຂ້າພະເຈົ້າຍັງໄດ້ເຫັນດວງວິນຍານຂອງຄົນທັງປວງທີ່ຖືກຕັດຄໍ ເພາະເປັນພຍານຝ່າຍພຣະເຢຊູ
ແລະເພາະພຣະທັມຂອງພຣະເຈົ້າຄືຜູ້ທີ່ບໍ່ໄດ້ບູຊາສັດຮ້າຍຫລືຮູບຂອງມັນ ແລະບໍ່ໄດ້ຮັບເຄື່ອງໝາຍຂອງມັນ
ຕິດໄວ້ທີ່ໜາຜາກຫລືມືຂອງຕົນ ຄົນເຫລົ່ານັ້ນກັບຄືນມີຊີວິດໃໝ່ ແລະໄດ້ຄຸ້ມຄອງຮ່ວມກັບພຣະຄຣິດໃນລະ
ຫວ່າງພັນປີ
5 (ນອກຈາກຄົນເຫລົ່ານີ້ຄົນອື່ນໆທີ່ຕາຍແລ້ວບໍ່ໄດ້ກັບຄືນມີຊີວິດອີກ ຈົນກວ່າພັນປີນັ້ນລ່ວງໄປແລ້ວ) ນີ້ແຫລະ,
ຄືການຄືນມາຈາກຕາຍຄັ້ງແຮກ
6 ຜູ້ໃດທີ່ມີສ່ວນໃນການຄືນມາຈາກຕາຍຄັ້ງແຮກ ຜູ້ນັ້ນແຫລະ, ກໍເປັນສຸກແລະບໍຣິສຸດ ຄວາມຕາຍຄັ້ງທີສອງຈະ
ບໍ່ມີອຳນາດເໜືອຄົນເຫລົ່ານັ້ນ ແຕ່ເຂົາຈະໄດ້ເປັນປະໂຣຫິດຂອງພຣະເຈົ້າແລະຂອງພຣະຄຣິດ ທັງຈະຄຸ້ມ
ຄອງຮ່ວມກັບພຣະອົງໃນລະຫວ່າງພັນປີ

Satan's Doom

(ອຊກ 38-39)

7 ເມື່ອພັນປີນັ້ນລ່ວງໄປແລ້ວ ຊາຕານຈະຖືກປ່ອຍອອກຈາກຄຸກບ່ອນຂັງມັນໄວ້
8 ມັນຈະອອກໄປຫລອກລວງບັນດາປະຊາຊາດ ທີ່ຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ ຄື ໂຄກ ແລະມາໂຄກ ໃຫ້
ມາໂຮມກັນເພື່ອການຮົບເສິກ ຈຳນວນຄົນຫລົ່ານັ້ນຫລາຍເໝືອນເມັດຊາຍທີ່ທະເລ
9 ເຂົາໄດ້ຍົກທັບອອກໄປທົ່ວໜ້າແຜ່ນດິນ ແລ້ວອ້ອມຄ້າຍພວກໄພ່ພົນຂອງພຣະເຈົ້າກັບນະຄອນທີ່ພຣະອົງຊົງ
ຮັກນັ້ນ ແຕ່ໄຟໄດ້ຕົກລົງມາຈາກສວັນລ້າງຜານຄົນເຫລົ່ານັ້ນເສັຽ
10 ສ່ວນພຍາມານທີ່ຫລອກລວງຄົນເຫລົ່ານັ້ນ ກໍຖືກຖິ້ມລົງໃນບຶງໄຟປົນກັບມາດ ຄືບ່ອນທີ່ສັດຮ້າຍແລະຄົນທີ່
ປອມຕົວເປັນຜູ້ປະກາດພຣະທັມຢູ່ໃນນັ້ນ ເຂົາຈະຕ້ອງທົນທຸກທໍຣະມານທັງກາງເວັນແລະກາງຄືນຕລອດໄປ
ເປັນນິດ

### ພຣະຣາຊບັນລັງອັນໃຫຍ່ສີຂາວແລະການຊົງພິພາກສາ

The Dead Are Judged

11 ແລ້ວຂ້າພະເຈົ້າໄດ້ເຫັນພຣະຣາຊບັນລັງໃຫຍ່ສີຂາວ ແລະເຫັນພຣະອົງຜູ້ຊົງປະທັບເທິງບັນລັງນັ້ນ ເມື່ອພຣະ
ອົງຊົງປາກົດແຜ່ນດິນໂລກແລະທ້ອງຟ້າກໍຜ່າຍໜີ ແລະບ່ອນຢູ່ສຳລັບແຜ່ນດິນໂລກແລະທ້ອງຟ້ານັ້ນກໍບໍ່ເຫັນ
ອີກ
12 ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ໃຫຍ່ແລະຜູ້ນ້ອຍ ຢືນຢູ່ຕໍ່ໜ້າພຣະຣາຊບັນລັງນັ້ນ ແລະໜັງສື
ຕ່າງໆກໍໄຂອອກ ມີໜັງສືອີກເຫລັ້ມນຶ່ງກໍໄຂອອກ ຄືທະບຽນແຫ່ງຊີວິດ ແລະຄົນທັງຫລາຍທີ່ຕາຍແລ້ວກໍຖືກ
ຊົງພິພາກສາ ຕາມການປະຕິບັດຂອງເຂົາທີ່ຂຽນໄວ້ໃນໜັງສືເຫລົ່ານັ້ນ
13 ທະເລສົ່ງຄົນທັງຫລາຍທີ່ຕາຍໃນທະເລຄືນ ຄວາມຕາຍແລະແດນມໍຣະນາກໍສົ່ງຄົນທັງຫລາຍທີ່ຢູ່ໃນແດນນັ້ນ
ຄືນ ເຂົາທັງປວງກໍຖືກຊົງພິພາກສາຕາມການປະຕິບັດຂອງຕົນທຸກຄົນ
14 ຄວາມຕາຍແລະແດນມໍຣະນາກໍຖືກຖິ້ມລົງໃນບຶງໄຟ ບຶງໄຟນີ້ແຫລະ, ເປັນຄວາມຕາຍຄັ້ງທີສອງ
15 ຖ້າຜູ້ໃດບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ ຜູ້ນັ້ນກໍຖືກຖິ້ມລົງໃນບຶງໄຟ

## 21 ທ້ອງຟ້າແລະແຜ່ນດິນໂລກໃໝ່

The New Heaven and the New Earth

1 ແລ້ວຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ ເພາະວ່າທ້ອງຟ້າເດີມແລະແຜ່ນດິນເດີມນັ້ນໄດ້
ລ່ວງໄປແລ້ວ ແລະທະເລກໍບໍ່ມີເໝືອນກັນ
2 ຂ້າພະເຈົ້າໄດ້ເຫັນນະຄອນສັກສິດ ຄືກຸງເຢຣູຊາເລັມໃຫມ່ ກຳລັງລົງມາຈາກສວັນແລະຈາກພຣະເຈົ້າ ນະ
ຄອນນີ້ໄດ້ຈັດຕຽມໄວ້ແລ້ວເໝືອນຢ່າງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ
3 ຂ້າພະເຈົ້າໄດ້ຍິນສຽງດັງມາຈາກພຣະຣາຊບັນລັງວ່າ, “ເບິ່ງແມ, ທີ່ສະຖິດຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ
ພຣະອົງຈະຊົງສະຖິດຢູ່ກັບເຂົາ ເຂົາພວກນັ້ນແຫລະ, ຈະເປັນໄພ່ພົນຂອງພຣະອົງ ແລະພຣະເຈົ້າເອງຈະປະ
ທັບຢູ່ກັບເຂົາ
4 ພຣະເຈົ້າຈະຊົງເຊັດນ້ຳຕາທຸກໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງ
ໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ
5 ພຣະອົງຜູ້ຊົງປະທັບເທິງພຣະຣາຊບັນລັງໄດ້ຊົງກ່າວວ່າ, “ເບິ່ງແມ, ເຮົາສ້າງສິ່ງທັງປວງຂຶ້ນໃໝ່” ແລະພຣະອົງ
ຊົງກ່າວອີກວ່າ, “ຈົ່ງຂຽນໄວ້ ເພາະວ່າຖ້ອຍຄຳເຫລົ່ານີ້ແຫລະ, ສັດຊື່ແລະທ່ຽງແທ້”
6 ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, “ສຳເຣັດແລ້ວ ເຮົານີ້ຄືອາລະຟາແລະໂອເມຄາ ເປັນເບື້ອງຕົ້ນແລະເປັນ
ເບື້ອງປາຍ ຜູ້ໃດຫິວນ້ຳ ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນ້ຳພຸແຫ່ງຊີວິດໂດຍບໍ່ຕ້ອງເສັຽຄ່າ
7 ຜູ້ໃດມີຊັຍຊະນະ ຜູ້ນັ້ນຈະໄດ້ຮັບສິ່ງເຫລົ່ານີ້ເປັນມໍຣະດົກ ເຮົາຈະເປັນພຣະເຈົ້າຂອງເຂົາ ເຂົານັ້ນແຫລະ, ຈະ
ເປັນບຸດຂອງເຮົາ
8 ແຕ່ສ່ວນຄົນຂີ້ໂຢ່ຍ ຄົນບໍ່ເຊື່ອ ຄົນທີ່ເຮັດການໜ້າກຽດໜ້າຊັງ ຄົນຄາຕກັມ ຄົນລ່ວງຜິດຊາຍຍິງ ຄົນໃຊ້ເວດ
ມົນຄາຖາ ຄົນໄຫວ້ພຣະທຽມ ແລະຄົນຂີ້ຕົວະທຸກຄົນນັ້ນ ມໍຣະດົກຂອງເຂົາຈະຢູ່ໃນບຶງທີ່ໄໝ້ຢູ່ດ້ວຍໄຟປົນ
ກັບມາດ ຊຶ່ງເປັນຄວາມຕາຍຄັ້ງທີສອງ”

Vision of the New Jerusalem

(ອຊກ 48:30-35)

9 ເທວາດາຕົນນຶ່ງໃນບັນດາເຈັດຕົນທີ່ຖືຂັນເຈັດໜ່ວຍ ອັນເຕັມໄປດ້ວຍໄພພິບັດຕະຣາຍສຸດທ້າຍທັງເຈັດປະການ
ນັ້ນ ໄດ້ມາເວົ້າກັບຂ້າພະເຈົ້າວ່າ, “ເຊີນມານີ້ ເຮົາຈະໃຫ້ທ່ານເຫັນເຈົ້າສາວທີ່ເປັນມະເຫສີຂອງພຣະເມສາ
ນ້ອຍນັ້ນ”

10 ທ່ານໄດ້ຍົກຂ້າພະເຈົ້າດ້ວຍພຣະວິນຍານໄປເທິງພູສູງໜ່ວຍໃຫຍ່ ແລະໄດ້ຊີ້ໃຫ້ຂ້າພະເຈົ້າເຫັນນະຄອນສັກ
ສິດຄືກຸງເຢຣູຊາເລັມ ຊຶ່ງກຳລັງລົງມາຈາກສວັນແລະຈາກພຣະເຈົ້າ
11 ນະຄອນນັ້ນປະກອບດ້ວຍຣັສມີຂອງພຣະເຈົ້າ ມີແສງຮຸ່ງເຮືອງເໝືອນແກ້ວມະນີອັນມີຄ່າແພງເໝືອນກັບແກ້ວ
ມະນີໂຊດອັນເສາະໃສ
12 ນະຄອນນັ້ນມີກຳແພງໃຫຍ່ສູງ ມີປະຕູສິບສອງປ່ອງ ທີ່ປະຕູນັ້ນມີເທວະດາສິບສອງຕົນ ແລະທີ່ປະຕູນັ້ນໄດ້ຈາ
ຣຶກຊື່ຕະກູນຂອງພວກອິສຣາເອນສິບສອງຕະກູນໄວ້
13 ທິດຕາເວັນອອກມີສາມປະຕູ ທິດເໜືອມີສາມປະຕູ ທິດໃຕ້ມີສາມປະຕູ ແລະທິດຕາເວັນຕົກມີສາມປະຕູ
14 ກຳແພງນະຄອນນັ້ນມີຫີນສິບສອງກ້ອນເປັນຖານ ແລະທີ່ຫີນນັ້ນໄດ້ຈາຣຶກຊື່ອັຄສາວົກສິບສອງຄົນຂອງພຣະ
ເມສານ້ອຍ
15 ເທວະດາຕົນທີ່ເວົ້າກັບຂ້າພະເຈົ້ານັ້ນຖືໄມ້ແທກຄຳ ເພື່ອຈະແທກພຣະນະຄອນ ແທກປະຕູ ກັບກຳແພງ ຂອງ
ນະຄອນນັ້ນ
16 ຮູບຂອງນະຄອນນັ້ນເປັນສີ່ຫລ່ຽມມົນທົນ ກວ້າງຍາວທໍ່ກັນ ທ່ານເອົາໄມ້ແທກນະຄອນນັ້ນໄດ້ສອງແສນວາ
ກວ້າງຍາວແລະສູງທໍ່ກັນ
17 ທ່ານແທກກຳແພງນະຄອນນັ້ນ ໄດ້ຮ້ອຍສີ່ສິບສີ່ສອກຕາມໄມ້ແທກວາທີ່ເທວະດານັ້ນໃຊ້ ຊຶ່ງເປັນເໝືອນໄມ້
ແທກວາທີ່ມະນຸດເຄີຍໃຊ້
18 ກຳແພງນະຄອນນັ້ນກໍດ້ວຍແກ້ວມະນີໂຊດ ແລະນະຄອນນັ້ນສ້າງດ້ວຍຄຳບໍຣິສຸດສຸກໃສເໝືອນແກ້ວ
19 ບັນດາຖານຂອງກຳແພງນະຄອນນັ້ນປະດັບດ້ວຍເພັດພອຍທຸກຊະນິດ ຖານທີນຶ່ງເປັນແກ້ວມະນີໂຊດ ທີສອງ
ໄພທູນ ທີສາມໂມຣາ ທີສີ່ມໍຣະກົດ
20 ທີຫ້າບຸດ ທີຫົກພິລາ ທີເຈັດບຸສບາຄຳນໍ້າແກ່ ທີແປດເພທາຍ ທີເກົ້າບຸສບາຄຳນໍ້າອ່ອນ ທີສິບຢົກ ທີສິບເອັດນິນ
ແລະທີສິບສອງເປັນແກ້ວເພທາຍສີມ່ວງ
21 ປະຕູທັງສິບສອງນັ້ນເຮັດດ້ວຍໄຂ່ມຸກສິບສອງໜ່ວຍ ປະຕູລະໜ່ວຍ ແລະຖນົນໃນນະຄອນນັ້ນເປັນຄຳບໍຣິສຸດ
ສ່ອງໃສເໝືອນແກ້ວ
22 ຂ້າພະເຈົ້າບໍ່ໄດ້ເຫັນມີພຣະວິຫານໃນນະຄອນນັ້ນ ເພາະອົງພຣະຜູ້ເປັນເຈົ້າ ຄືພຣະເຈົ້າຜູ້ຊົງຣິດທານຸພາບສູງ
ສຸດ ແລະພຣະເມສານ້ອຍຊົງເປັນພຣະວິຫານໃນນະຄອນນັ້ນ
23 ນະຄອນນັ້ນບໍ່ຕ້ອງການແສງສວ່າງຂອງດວງອາທິດແລະດວງຈັນ ເພາະພຣະຣັສມີຂອງພຣະເຈົ້າຊົງເປັນແສງ
ສວ່າງ ແລະພຣະເມສານ້ອຍຊົງເປັນໂຄມໄຟຂອງນະຄອນນັ້ນ
24 ບັນດາປະຊາຊາດຈະທ່ຽວໄປມາໃນທ້າມກາງແສງສວ່າງຂອງນະຄອນນັ້ນ ແລະບັນດາກະສັດໃນແຜ່ນດິນ
ໂລກຈະນຳເອົາສະງ່າຣາສີຂອງຕົນເຂົ້າໄປໃນນະຄອນນັ້ນ
25 ປະຕູທັງຫລາຍໃນນະຄອນນັ້ນຈະບໍ່ອັດໃນເວລາກາງເວັນ (ເພາະໃນນະຄອນນັ້ນບໍ່ມີກາງຄືນ)
26 ເຂົາຈະນຳເອົາສະງ່າຣາສີແລະກຽດຕິຍົດຂອງນາໆປະເທດມາສູ່ນະຄອນນັ້ນ
27 ສິ່ງນຶ່ງສິ່ງໃດທີ່ຖືກຊິ່ວມົວຫມອງ ຫລືຜູ້ໃດທີ່ເຮັດການຫນ້າກຽດຫນ້າຊັງຫລືເວົ້າຕົວະ ຈະເຂົ້າໄປໃນນະຄອນ
ນັ້ນບໍ່ໄດ້ເປັນເດັດຂາດ ມີແຕ່ຄົນທັງຫລາຍທີ່ມີຊື່ຈົດໄວ້ໃນທະບຽນຂອງພຣະເມສານ້ອຍເທົ່ານັ້ນຈຶ່ງຈະເຂົ້າໄດ້

## 22

The River of Life

1 ແລ້ວເທວະດາຕົນນັ້ນໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນໍ້າທີ່ມີຊີວິດໃສເໝືອນແກ້ວໄຫລອອກມາຈາກ
ພຣະຣາຊບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ

2 ນ້ຳນັ້ນໄຫລຜ່ານຖນົນຂອງນະຄອນນັ້ນ ຢູ່ຣິມແມ່ນ້ຳທັງສອງຟາກມີຕົ້ນໄມ້ແຫ່ງຊີວິດຊຶ່ງເກີດຜົນສິບສອງຊະ
ນິດ ເກີດຜົນທຸກເດືອນ ແລະໃບຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ
3 ຈະບໍ່ມີສິ່ງໃດຖືກຊົງປ້ອຍດ່າອີກຕໍ່ໄປ ແຕ່ພຣະຣາຊບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍຈະຕັ້ງຢູ່ທີ່
ນັ້ນ ແລະບັນດາຂ້ອຍໃຊ້ຂອງພຣະອົງຈະບົວລະບັດພຣະອົງ
4 ເຂົາຈະເຫັນພຣະພັກຂອງພຣະອົງ ແລະພຣະນາມຂອງພຣະອົງຈະຊົງປະທັບຕາໃສ່ໜ້າຜາກຂອງເຂົາ
5 ກາງຄືນຈະບໍ່ມີອີກຕໍ່ໄປ ເຂົາບໍ່ຕ້ອງການແສງໂຄມໄຟຫລືແສງອາທິດ ເພາະວ່າອົງພຣະຜູ້ເປັນເຈົ້າຈະຊົງສ່ອງ
ສວ່າງໃສ່ເຂົາ ແລະເຂົາຈະໄດ້ຄຸ້ມຄອງຢູ່ຕລອດໄປເປັນນິດ

## ພຣະເຢຊູຈະສະເດັດມາໂດຍໄວ

6 ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, "ຖ້ອຍຄຳເຫລົ່ານີ້ແຫລະ, ສັດຊື່ແລະທ່ຽງແທ້ ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າແຫ່ງດວງວິນຍານຂອງບັນດາຜູ້ປະກາດພຣະທັມ ໄດ້ຊົງໃຫ້ເທວະດາຂອງພຣະອົງສະແດງແກ່ບັນດາ
ຂ້ອຍໃຊ້ຂອງພຣະອົງ ເພື່ອໃຫ້ຮູ້ເຫດການທັງປວງທີ່ຈຳເປັນຕ້ອງເກີດຂຶ້ນໃນໄວໆນັ້ນ"
7 "ເບິ່ງແມ, ເຮົາຈະມາໃນໄວໆນີ້ ຜູ້ໃດທີ່ຖືຮັກສາຄຳທຳນວາຍໃນໜັງສືມ້ວນນີ້ ຜູ້ນັ້ນແຫລະ, ເປັນສຸກ"
Epilogue and Benediction
8 ຝ່າຍຂ້າພະເຈົ້າ ຄືໂຢຮັນ ເປັນຜູ້ໄດ້ຍິນແລະໄດ້ເຫັນເຫດການເຫລົ່ານີ້ ເມື່ອຂ້າພະເຈົ້າໄດ້ຍິນແລະໄດ້ເຫັນ
ແລ້ວ ກໍນ້ອມຕົວລົງຈະນະມັສການແທບຕີນຂອງເທວະດາຕົນທີ່ໄດ້ສະແດງເຫດການເຫລົ່ານີ້ແກ່ຂ້າພະເຈົ້າ
9 ເທວະດາຕົນນັ້ນໄດ້ກ່າວກັບຂ້າພະເຈົ້າວ່າ, "ລະວັງ ຢ່າເຮັດຢ່າງນັ້ນ ເຮົາເປັນເພື່ອນຂ້ອຍໃຊ້ຢ່າງດຽວກັນກັບ
ທ່ານ ແລະກັບພວກພີ່ນ້ອງຂອງທ່ານຊຶ່ງເປັນຜູ້ປະກາດພຣະທັມ ແລະກັບພວກທີ່ຖືຮັກສາຖ້ອຍຄຳທັງຫລາຍ
ໃນໜັງສືມ້ວນນີ້ ໃຫ້ທ່ານນະມັສການພຣະເຈົ້າສາ"
10 ແລ້ວທ່ານໄດ້ບອກຂ້າພະເຈົ້າວ່າ, "ຢ່າປະທັບຕາອັດຄຳທຳນວາຍໃນໜັງສືມ້ວນນີ້ ເພາະວ່າເວລານັ້ນໃກ້ຈະ
ເຖິງແລ້ວ
11 ຝ່າຍຄົນອະທັມກໍໃຫ້ເຮັດການອະທັມຕໍ່ໄປ ຜູ້ທີ່ເປັນຄົນຊົ່ວຊ້າກໍໃຫ້ເຂົາຊົ່ວຊ້າຕໍ່ໄປ ຝ່າຍຄົນຊອບທັມກໍໃຫ້
ເຮົາການຊອບທັມຕໍ່ໄປ ແລະຜູ້ທີ່ເປັນຄົນບໍຣິສຸດກໍໃຫ້ເຂົາເປັນບໍຣິສຸດຕໍ່ໄປ"
12 "ເບິ່ງແມ, ເຮົາຈະມາໃນໄວໆນີ້ ເຮົາຈະເອົາບຳເໜັດຂອງເຮົາມານຳ ເພື່ອຕອບແທນການປະຕິບັດຂອງທຸກຄົນ
13 ຝ່າຍເຮົາ ຄື ອາລະຟາ ແລະໂອເມກາ ເປັນຜູ້ກົກແລະເປັນຜູ້ສຸດທ້າຍ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ"
14 ຄົນທັງຫລາຍທີ່ຊຳຣະລ້າງເສື້ອຜ້າຂອງຕົນນັ້ນແຫລະ, ເປັນສຸກ ເພື່ອວ່າເຂົາຈະມີສິດເຂົ້າໄປເຖິງຕົ້ນໄມ້ທີ່ໃຫ້
ມີຊີວິດ ແລະເພື່ອເຂົາຈະໄດ້ເຂົ້າໄປໃນນະຄອນນັ້ນທາງປະຕູ
15 ສ່ວນຝູງໝາກັບຄົນທີ່ໃຊ້ເວດມົນຄາຖາ ຄົນລ່ວງຜິດຊາຍຍິງ ຄົນຄາຕກັມ ຄົນໄຫວ້ພຣະທຽມ ກັບທຸກໆຄົນທີ່
ຮັກຄວາມບໍ່ຈິງ ແລະເຮັດຕາມພວກເຫລົ່ານີ້ແຫລະ, ຈະຢູ່ພາຍນອກ
16 "ຝ່າຍເຮົາ ຄື ເຢຊູ ເຮົາໄດ້ໃຊ້ເທວະດາຂອງເຮົາໄປເປັນພຍານ ເພື່ອສະແດງເຫດການເຫລົ່ານີ້ແກ່ທ່ານສຳລັບ
ຄຣິສຕະຈັກທັງຫລາຍ ເຮົານີ້ເປັນຮາກເຄົ້າແລະໜໍ່ເຊື້ອຂອງດາວິດ ເປັນດາວເພັດໃສຮຸ່ງເຮືອງ"
17 ຝ່າຍພຣະວິນຍານແລະເຈົ້າສາວຊົງກ່າວວ່າ, "ເຊີນມາ" ໃຫ້ຜູ້ໄດ້ຍິນນັ້ນທູນວ່າ, "ເຊີນມາ" ໃຫ້ຜູ້ຫິວນ້ຳເຂົ້າມາ
ຜູ້ໃດມີໃຈປາຖນາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບຊີວິດໂດຍບໍ່ຕ້ອງເສັຽຄ່າ
18 ຝ່າຍຂ້າພະເຈົ້າ, ເປັນພຍານແກ່ທຸກຄົນທີ່ໄດ້ຍິນຄຳທຳນວາຍທັງຫລາຍໃນໜັງສືມ້ວນນີ້ວ່າ ຖ້າຜູ້ໃດຈະເພີ້ມ
ເຕີມຂໍ້ຄວາມໃດໃສ່ໜັງສືນີ້ ພຣະເຈົ້າຈະຊົງເອົາພັຍອັນຕະຣາຍທີ່ຂຽນໄວ້ໃນໜັງສືມ້ວນນີ້ ເພີ້ມເຕີມແກ່ຜູ້ນັ້ນ
19 ແລະຖ້າຜູ້ໃດຕັດຂໍ້ຄວາມໃດອອກຈາກໜັງສືທຳນວາຍນີ້ ພຣະເຈົ້າກໍຈະຊົງຕັດສ່ວນແບ່ງຂອງຜູ້ນັ້ນທີ່ມີຢູ່ໃນ
ຕົ້ນໄມ້ຊຶ່ງໃຫ້ມີຊີວິດ ແລະສ່ວນແບ່ງໃນນະຄອນສັກສິດ ທີ່ຂຽນໄວ້ໃນໜັງສືມ້ວນນີ້ອອກເສັຽ

20 ພຣະອົງຜູ້ຊົງເປັນພຍານໃນເຫດການເຫລົ່ານີ້ຊົງກ່າວວ່າ, “ແນ່ນອນ ເຮົາຈະມາໃນໄວໆນີ້” “ອາແມນ ພຣະເຢ
ຊູເຈົ້າ ເຊີນສະເດັດມາເທີ້ນ”
21 ຂໍໃຫ້ພຣະຄຸນແຫ່ງພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ນຳຄົນທັງປວງເທີ້ນ